ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ສິ່ງແວດລ້ອມ

ເລກທີ 1246 /ກສ

ນະຄອນຫຼວງວຽງຈັນ, ວັນທີ 12 SEP 2025

# ຂໍ້ຕົກລົງ
## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມລ້ຽງສັດ ແລະ ການປະມົງ

- ອີງຕາມ ກົດໝາຍ ວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ (ສະບັບປັບປຸງ) ສະບັບເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016 ແລະ ກົດໝາຍ ວ່າດ້ວຍສັດນ້ຳ ແລະ ການປະມົງ ສະບັບເລກທີ 41/ສພຊ, ລົງວັນທີ 17 ກໍລະກົດ 2023;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ 534/ນຍ, ລົງວັນທີ 14 ສິງຫາ 2025;
- ອີງຕາມ ການຕົກລົງ ຂອງກອງປະຊຸມຄະນະປະຈຳພັກກະຊວງກະສິກຳ ແລະ ສິ່ງແວດລ້ອມ, ຄັ້ງວັນທີ 29 ສິງຫາ 2025.

**ລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມລ້ຽງສັດ ແລະ ການປະມົງ ແນໃສ່ຈັດຕັ້ງປະຕິບັດ ແລະ ພັດທະນາວຽກງານລ້ຽງສັດ, ສັດຕະວະແພດ ແລະ ການປະມົງ ໃຫ້ມີປະສິດທິຜົນສູງ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ກົມລ້ຽງສັດ ແລະ ການປະມົງ ຂຽນເປັນຕົວອັກສອນຫຍໍ້ວ່າ **"ກລປ"** ແມ່ນກົງຈັກການຈັດຕັ້ງໜຶ່ງຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ, ມີພາລະບົດບາດເປັນເສນາທິການໃຫ້ແກ່ກະຊວງກະສິກຳ ແລະ ສິ່ງແວດລ້ອມ ໃນການຄຸ້ມຄອງ, ພັດທະນາ ແລະ ບໍລິການດ້ານການລ້ຽງສັດ, ສັດຕະວະແພດ ແລະ ການປະມົງ ໃຫ້ມີການຂະຫຍາຍຕົວ ເພື່ອຮັບປະກັນຄວາມໝັ້ນຄົງໃນການສະໜອງທາດຊີ້ນ, ໄຂ່, ປາ ທີ່ມີໂພຊະນາການ, ປອດໄພ ແລະ ເປັນສິນຄ້າ ຕາມທິດມີຈຸດສຸມ, ມີຄຸນນະພາບ, ສະອາດ, ສີຂຽວ ແລະ ຍືນຍົງ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ກົມລ້ຽງສັດ ແລະ ການປະມົງ ມີໜ້າທີ່ ດັ່ງນີ້:

1. ປະຕິບັດກົດໝາຍ, ດຳລັດ, ນິຕິຕ່າງໆ ຂອງຂັ້ນເທິງ ແລະ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ;
2. ຄົ້ນຄວ້າ, ເຊື່ອມຊຶມ ຜັນຂະຫຍາຍແນວທາງນະໂຍບາຍ ຂອງພັກ ແລະ ລັດຖະບານ ກ່ຽວກັບວຽກງານການລ້ຽງສັດ, ສັດຕະວະແວດ ແລະ ການປະມົງ, ຈັດຕັ້ງປະຕິບັດວາລະແຫ່ງຊາດ ໂດຍສະເພາະວຽກງານສົ່ງເສີມການຜະລິດພາຍໃນ ເພື່ອທົດແທນການນຳເຂົ້າ ແລະ ຜະລິດເປັນສິນຄ້າສົ່ງອອກ ດ້ວຍການຫັນເປັນແຜນງານ, ໂຄງການ ພ້ອມທັງຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ;
3. ຄົ້ນຄວ້າ, ສ້າງວິໄສທັດ, ຮ່າງນະໂຍບາຍ, ຍຸດທະສາດ, ແຜນການ, ແຜນງານ ແລະ ໂຄງການ ໃນວຽກງານລ້ຽງສັດ, ສັດຕະວະແພດ, ປະມົງ ແລະ ການປຸງແຕ່ງ ເປັນສິນຄ້າ ເພື່ອສະເໜີລັດຖະມົນຕີຮັບຮອງ ແລະ ອະນຸມັດ ພ້ອມທັງເປັນໃຈກາງ ຄຸ້ມຄອງ, ຕິດຕາມ, ຊຸກຍູ້ ການຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ;
4. ຄົ້ນຄວ້າ, ປັບປຸງ ບັນດານິຕິກຳ, ລະບຽບການ ແລະ ປະກອບຄຳເຫັນ, ໃຫ້ການປຶກສາ, ແນະນຳ ເພື່ອອຳນວຍຄວາມສະດວກ ໃຫ້ແກ່ການລົງທຶນ, ການເຄື່ອນໄຫວດຳເນີນທຸລະກິດ ຂອງບັນດາບໍລິສັດ, ຜູ້ປະກອບການ, ຫົວໜ່ວຍການຜະລິດ, ຟາມ, ສະມາຄົມ, ສະຫະກອນ, ກຸ່ມ ແລະ ຄອບຄົວຕົວແບບ ໃຫ້ຖືກຕ້ອງ, ວ່ອງໄວ, ໂປ່ງໃສ ແລະ ໄດ້ຮັບຜົນດີ;
5. ໂຄສະນາ, ເຜີຍແຜ່, ຕິດຕາມ, ກວດກາປະເມີນຜົນ ການຈັດຕັ້ງປະຕິບັດ ບັນດາກົດໝາຍ, ນິຕິກຳລຸ່ມກົດໝາຍ ກ່ຽວກັບການລ້ຽງສັດ, ສັດຕະວະແວດ ແລະ ການປະມົງ;
6. ປັບປຸງ ແລະ ພັດທະນາ ໂຄງລ່າງພື້ນຖານ, ວັດຖຸເຕັກນິກ ແລະ ວິຊາການ ເພື່ອນຳໃຊ້ເຂົ້າໃນຂະບວນການວິໄຈ, ທົດລອງ, ຢັ້ງຢືນມາດຕະຖານສິນຄ້າ ກ່ຽວກັບສັດ ແລະ ສັດນ້ຳ ແລະ ອຳນວຍຄວາມສະດວກໃຫ້ແກ່ການປະຕິບັດວຽກງານໃນຂົງເຂດການລ້ຽງສັດ, ສັດຕະວະແພດ ແລະ ການປະມົງ;
7. ຄົ້ນຄວ້າ, ກຳນົດມາດຕະຖານ ແລະ ຂຶ້ນທະບຽນ ບັນດາໂຮງງານຜະລິດອາຫານສັດ, ໂຮງປະສົມອາຫານສັດ, ໂຮງຂ້າສັດ, ໂຮງງານປຸງແຕ່ງຜະລິດຕະພັນ ສັດ ແລະ ສັດນ້ຳ ຂັ້ນຕົ້ນ, ສະຖານທີ່ເກັບຮັກສາຜະລິດຕະພັນສັດ ແລະ ສັດນ້ຳ ຂັ້ນຕົ້ນ, ໂຮງງານຢາສັດຕະວະແພດ, ການຂົນສົ່ງ ແລະ ຕະຫຼາດສິນຄ້າ ກ່ຽວກັບສັດ ແລະ ສັດນ້ຳ;
8. ຄຸ້ມຄອງ, ພັດທະນາ ແລະ ຕິດຕາມ, ກວດກາ ແລະ ອອກໃບຢັ້ງຢືນຮັບຮອງ ມາດຕະຖານ ກ່ຽວກັບການລ້ຽງສັດ, ສັດຕະວະແພດ ແລະ ປະມົງ ລວມທັງບັນດາໂຮງງານປຸງແຕ່ງຜະລິດຕະພັນສັດ ແລະ ສັດນ້ຳ ຂັ້ນຕົ້ນ;
9. ຄົ້ນຄວ້າ, ສັງລວມ ບັນດາມາດຕະຖານເງື່ອນໄຂດ້ານເຕັກນິກ ແລະ ຄຸນນະພາບຂອງສິນຄ້າທີ່ຕິດພັນກັບວຽກງານສຸຂານາໄມ ແລະ ສຸຂານາໄມພືດ (SPS) ເພື່ອການເຈລະຈາເປີດຕະຫຼາດກັບປະເທດຄູ່ຄ້າ ພ້ອມທັງສຶກສາບັນດາສັນຍາ, ສົນທິສັນຍາ, ກົດບັດ, ຂໍ້ຕົກລົງ, ມາດຕະຖານ ແລະ ມາດຕະການຕ່າງໆ ທີ່ກ່ຽວຂ້ອງກັບການລ້ຽງສັດ, ສັດຕະວະແພດ ແລະ ປະມົງ ເພື່ອຜັນຂະຫຍາຍມາເປັນນິຕິກຳ, ລະບຽບການ ແລະ ມາດຕະການ ຂອງຂະແໜງການ;
10. ຊຸກຍູ້, ຕິດຕາມ, ກວດກາ ແລະ ເກັບກຳສັງລວມຂໍ້ມູນ ການຂຶ້ນທະບຽນຟາມລ້ຽງສັດ ແລະ ສັດນ້ຳ ຕາມຂັ້ນຄຸ້ມຄອງ ໃຫ້ຖືກຕ້ອງຄົບຖ້ວນ ຕາມມາດຕະຖານ ແລະ ເຕັກນິກ ກຳນົດໄວ້;

11. ຊຸກຍູ້ສົ່ງເສີມການຜະລິດ ຊີ້ນ, ໄຂ່, ນົມ, ປາ ແລະ ສັດນ້ຳ ໃຫ້ພຽງພໍ ເພື່ອຄ້ຳປະກັນດ້ານສະບຽງອາຫານ ແລະ ໂພຊະນາການ ພ້ອມທັງເປັນວັດຖຸດິບປ້ອນໂຮງງານປຸງແຕ່ງ ໃຫ້ຮັບປະກັນຄວາມສະອາດ, ປອດໄພ ເພື່ອຊົມໃຊ້ພາຍໃນ ທົດແທນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ;
12. ພັດທະນາການລ້ຽງສັດ, ສັດນ້ຳ ແບບເປັນຟາມທີ່ທັນສະໄໝ ໂດຍມີການກຳນົດເຂດລ້ຽງຕິດພັນກັບການປຸງແຕ່ງ ແລະ ການຕະຫຼາດ ຕາມທ່າແຮງ ຂອງທ້ອງຖິ່ນ; ຄຸ້ມຄອງ ແລະ ຂຶ້ນທະບຽນພົມສັດລ້ຽງ ແລະ ສັດນ້ຳທີ່ລ້ຽງ ພັດທະນາລະບົບການຕິດຕາມຍ້ອນຫຼັງປະຫວັດຂອງສັດ, ສັດນ້ຳທີ່ລ້ຽງ, ຜະລິດຕະພັນສັດ ແລະ ສັດນ້ຳທີ່ລ້ຽງເປັນສິນຄ້າ ໃຫ້ໄດ້ຄຸນນະພາບ ແລະ ປອດໄພ ສອດຄ່ອງກັບມາດຕະຖານສຸຂານາໄມ ຂອງປະເທດຄູ່ຄ້າ;
13. ຊຸກຍູ້ສະໜັບສະໜູນການພັດທະນາ, ປົກປັກຮັກສາ ແລະ ນຳໃຊ້ ແນວພັນສັດ ແລະ ສັດນ້ຳ, ນ້ຳເຊື້ອໂຕອ່ອນ, ໄນໂຕເຈນແຫຼວ ລວມທັງການຜະລິດອາຫານສັດ ແລະ ການພັດທະນາທົ່ງຫຍ້າລ້ຽງສັດ;
14. ເກັບກຳສັງລວມຂໍ້ມູນສະຖິຕິ ກ່ຽວກັບຟາມລ້ຽງສັດ ແລະ ສັດນ້ຳ ໃຫ້ລະອຽດຄົບຖ້ວນ ພ້ອມທັງສັງລວມປະລິມານການຜະລິດ ແລະ ປະລິມານຄວາມຕ້ອງການບໍລິໂພກຢູ່ພາຍໃນປະເທດໃນແຕ່ລະປີ ເພື່ອຄຸ່ມດ່ຽງດ້ານສະບຽງອາຫານ ແລະ ແນວພັນ ແລະ ເພື່ອກຳນົດລາຍການ ແລະ ມາດຕະການ ຊຸກຍູ້ສົ່ງເສີມການຜະລິດພາຍໃນ ທົດແທນການນຳເຂົ້າ ແລະ ຜະລິດເປັນສິນຄ້າເພື່ອສົ່ງອອກ;
15. ຊຸກຍູ້ສົ່ງເສີມການຜະລິດຫົວອາຫານ ສັດ ແລະ ສັດນ້ຳ ຢູ່ພາຍໃນປະເທດ ໃຫ້ສາມາດກຸ້ມຕົນເອງ ແລະ ເປັນສິນຄ້າສົ່ງອອກ;
16. ຄຸ້ມຄອງ, ຕິດຕາມ ແລະ ກວດກາ ວຽກງານກັກກັນສັດ, ຄວບຄຸມການເຄື່ອນຍ້າຍສັດ ແລະ ສັດນ້ຳ, ຜະລິດຕະພັນສິນຄ້າ ກ່ຽວກັບສັດ ແລະ ສັດນ້ຳ, ການສັດຕະວະແພດ ແລະ ການປະມົງ ໃນການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ລວມທັງການຢັ້ງຢືນດ້ານສຸຂະພາບສັດ ແລະ ສຸຂານາໄມ;
17. ພັດທະນາການຜະລິດ, ສະໜອງ ແລະ ຂະຫຍາຍຕາໜ່າງການນຳໃຊ້ຢາສັດຕະວະແພດ ພ້ອມທັງການສະໜອງອຸປະກອນການສັດຕະວະແພດ;
18. ຄົ້ນຄວ້າ, ຂຶ້ນທະບຽນ ແລະ ຈົດລິຂະສິດ ສູດອາຫານສັດ, ຢາສັດຕະວະແພດ, ຜະລິດຕະພັນການສັດຕະວະແພດ, ວັດຖຸດິບອາຫານສັດ, ຜະລິດຕະພັນສິນຄ້າ ກ່ຽວກັບສັດ ແລະ ການປະມົງ, ສານເຄມີສຳລັບຜະລິດຢາສັດຕະວະແພດ, ເຊື້ອພັນພະຍາດສັດ, ແນວພັນ, ນ້ຳເຊື້ອ, ໂຕອ່ອນ;
19. ສ້າງ, ປັບປຸງ ແລະ ຈັດຕັ້ງປະຕິບັດ ລະບົບເຝົ້າລະວັງ, ກັນ ແລະ ຄວບຄຸມພະຍາດສັດ ແລະ ສັດນ້ຳ, ພັດທະນາລະບົບຄວາມປອດໄພທາງດ້ານຊີວະພາບ ຂອງການລ້ຽງສັດ ແລະ ສັດນ້ຳ ພ້ອມທັງກຳນົດ ແລະ ສ້າງເຂດ ຫຼື ຟາມ ປອດພະຍາດລະບາດ ສັດ, ສັດນ້ຳ ເພື່ອສະເໜີຕໍ່ກະຊວງກະສິກຳ ແລະ ສິ່ງແວດລ້ອມ ປະກາດຍົກເລີກ ເຂດລະບາດພະຍາດ;
20. ຄຸ້ມຄອງ ແລະ ພັດທະນາ ດ່ານກວດກາສັດຕະວະແພດ ເພື່ອກວດກາການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດ, ສັດນ້ຳ, ຜະລິດຕະພັນສັດ ແລະ ສັດນ້ຳ ພ້ອມທັງຄົ້ນຄວ້າ ແລະ ກຳນົດຈຸດກວດກາຊົ່ວຄາວພາຍໃນປະເທດ ແລະ ຈຸດກວດກາສັດເຂົ້າເຂດປອດພະຍາດສັດ ໃນກໍລະນີເກີດພະຍາດລະບາດ;
21. ກຳນົດບັນຊີລາຍຊື່ພະຍາດ ສັດ ແລະ ສັດນ້ຳ ທີ່ຈຳເປັນຕ້ອງແຈ້ງ, ລາຍການສານຊີວະພັນ-ເຄມີພັນ, ຢາສັດຕະວະແພດ ທີ່ນຳໃຊ້ເຂົ້າໃນການປ້ອງກັນ ແລະ ຄວບຄຸມ ການແຜ່ລະບາດຂອງພະຍາດ ລວມທັງການກຳນົດບັນຊີສັດນ້ຳ;
22. ປັບປຸງລະບົບການວິໄຈ ພະຍາດສັດ, ສັດນ້ຳ, ສານເຄມີຕົກຄ້າງ ແລະ ເຊື້ອທີ່ຕ້ານຕໍ່ຢາຕ້ານເຊື້ອ, ວິໄຈຄຸນນະພາບ-ຄວາມປອດໄພ ຂອງອາຫານສັດ, ຢາສັດຕະວະແພດ, ຜະລິດຕະພັນສັດ ແລະ ສັດນ້ຳ, ຄຸນນະພາບນ້ຳ ສຳລັບການລ້ຽງສັດ ແລະ ສັດນ້ຳ ແລະ ລວມທັງການຕິດຕາມ ແລະ ເຝົ້າລະວັງ ເຊື້ອທີ່ຕ້ານຕໍ່ຢາຕ້ານເຊື້ອຈຸລະຊີບ;

23. ສ້າງ ແລະ ປັບປຸງ ຕາໜ່າງການບໍລິການ, ຫຼັກສູດຝຶກອົບຮົມ ແລະ ວິຊາຊີບ ດ້ານການລ້ຽງສັດ, ສັດຕະວະແພດ, ປະມົງ ແລະ ປຸງແຕ່ງຜະລິດຕະພັນຂັ້ນຕົ້ນ ໃຫ້ເຂັ້ມແຂງ; ສ້າງ ແລະ ປັບປຸງ ຕາໜ່າງການບໍລິການທາງດ້ານສັດຕະວະແພດຢູ່ແຕ່ລະຂັ້ນ ໃຫ້ໄດ້ມາດຕະຖານ ແລະ ທົ່ວເຖິງ;
24. ຊຸກຍູ້ການສ້າງຕັ້ງສະພາສັດຕະວະແພດ, ສະມາຄົມ, ການສ້າງຕັ້ງກຸ່ມ, ສະຫະກອນ ລ້ຽງສັດ, ສັດຕະວະແພດ ແລະ ປະມົງ, ກອງທຶນພັດທະນາດ້ານການລ້ຽງສັດ, ສັດນ້ຳ ແລະ ວຽກງານສະຫວັດດີການສັດ;
25. ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ບັນດາໂຄງການງົບປະມານຂອງລັດ ແລະ ໂຄງການຮ່ວມມືກັບຕ່າງ ປະເທດ, ໂຄງການລົງທຶນຂອງພາກເອກະຊົນ ກ່ຽວກັບວຽກລ້ຽງສັດ ແລະ ການປະມົງ ໃຫ້ໄປຕາມວຽກຈຸດສຸມ ຂອງລັດຖະບານໃນແຕ່ລະໄລຍະ ທັງຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການ ມີການຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດ ໃຫ້ມີຜົນສຳເລັດ;
26. ຄຸ້ມຄອງ, ຕິດຕາມ, ກວດກາ ດ້ານວິຊາການ ຂອງບັນດາທຸລະກິດ ກ່ຽວກັບການລ້ຽງສັດ, ສັດຕະວະແພດ ແລະ ປະມົງ ເປັນຕົ້ນ: ການຂ້າ ແລະ ປຸງແຕ່ງຜະລິດຕະພັນສັດ ແລະ ສັດນ້ຳຂັ້ນຕົ້ນ, ການກວດກາອະນາໄມຊີ້ນ, ຄວບຄຸມຄຸນນະພາບ ແລະ ຄວາມປອດໄພ ຂອງຜະລິດຕະພັນສັດ ແລະ ສັດນ້ຳ ຂັ້ນຕົ້ນ, ອາຫານສັດ ແລະ ຢາສັດຕະວະແພດ;
27. ພົວພັນ, ຮ່ວມມື ແລະ ປະສານງານ ກັບຂະແໜງການອື່ນ ຢູ່ພາຍໃນ ແລະ ອົງການຈັດຕັ້ງສາກົນ, ສະຖາບັນການເງິນ, ບັນດາປະເທດເພື່ອນມິດ, ຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງ ໃນການແລກປ່ຽນຂໍ້ມູນຂ່າວສານ, ສົ່ງເສີມການລົງທຶນ, ການຊ່ວຍເຫຼືອດ້ານວິຊາການ ເພື່ອພັດທະນາວຽກງານລ້ຽງສັດ, ສັດຕະວະແພດ ແລະ ການປະມົງ ໃຫ້ເຂັ້ມແຂງ;
28. ປະກອບສ່ວນເຂົ້າໃນການພັດທະນາສູນ, ສະຖານີ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ແລະ ບັນດາວິທະຍາໄລທີ່ຂຶ້ນກັບກະຊວງກະສິກຳ ແລະ ສິ່ງແວດລ້ອມ ດ້ວຍການຫັນກົດຈະກຳໂຄງການ ເພື່ອສະໜອງເຕັກນິກວິຊາການ ແລະ ສິ່ງອຳນວຍຄວາມສະດວກ ໃນວຽກງານລ້ຽງສັດ, ສັດຕະວະແພດ ແລະ ປະມົງ ໃຫ້ມີຄວາມເຂັ້ມແຂງ;
29. ຄຸ້ມຄອງວຽກງານລ້ຽງສັດ ແລະ ສັດນ້ຳ ທີ່ເປັນມິດກັບສິ່ງແວດລ້ອມ ເພື່ອໃຫ້ສາມາດປັບຕົວເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດ ແລະ ຄວບຄຸມການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ຈາກການລ້ຽງສັດ ແລະ ສັດນ້ຳ;
30. ສ້າງ, ພັດທະນາ ເວບໄຊ, ຖານຂໍ້ມູນສະຖິຕິ ໃນວຽກງານລ້ຽງສັດ, ສັດຕະວະແພດ ແລະ ປະມົງ ທີ່ເປັນລະບົບ ແລະ ເຜີຍແຜ່ຂໍ້ມູນຂ່າວສານ ທີ່ນຳໃຊ້ລະບົບເຕັກໂນໂລຊີທີ່ທັນສະໄໝ ສາມາດເຊື່ອມໂຍງທັງພາຍໃນ ແລະ ສາກົນ;
31. ສັງລວມ, ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ປະຈຳປີ, ກາງສະໄໝ ແລະ 5 ປີ ຂອງກົມ ໃຫ້ຂັ້ນເທິງ ແລະ ພາກສ່ວນກ່ຽວຂ້ອງ ເປັນປົກກະຕິ ແລະ ທັນເວລາ;
32. ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນນິຕິກຳອື່ນ ແລະ ການມອບໝາຍ ຂອງລັດຖະມົນຕີ, ຮອງລັດຖະມົນຕີຜູ້ຊີ້ນຳ.

### ມາດຕາ 4 ຂອບເຂດສິດ

ກົມລ້ຽງສັດ ແລະ ການປະມົງ ມີສິດ ດັ່ງນີ້:

1. ນຳສະເໜີ ຮ່າງ ຍຸດທະສາດ, ແຜນງານ, ແຜນການ, ໂຄງການ ຈັດຕັ້ງປະຕິບັດວາລະແຫ່ງຊາດ ຂອງກົມ ແລະ ຂະແໜງການ; ກຳນົດນະໂຍບາຍ, ມາດຕະການໃນການສົ່ງເສີມການຜະລິດພາຍໃນ ແລະ ສົ່ງອອກ; ນຳສະເໜີມາດຕະຖານລວມດ້ານເຕັກນິກ ແລະ ຄຸນນະພາບດ້ານການລ້ຽງສັດ, ສັດຕະວະແພດ,

ປະມົງ ແລະ ການປຸງແຕ່ງຂັ້ນຕົ້ນ ຕໍ່ກະຊວງກະສິກຳ ແລະ ສິ່ງແວດລ້ອມ ພິຈາລະນາ;

2. ອອກຂໍ້ຕົກລົງ, ແຈ້ງການ, ຄຳແນະນຳ, ຄູ່ມືວິຊາການ, ໜັງສືສະເໜີເຖິງ ຫ້ອງການ, ບັນດາກົມ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບສອງ ທີ່ຂຶ້ນກັບກະຊວງ ແລະ ຂະແໜງສາຍຕັ້ງຂອງຕົນຢູ່ທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດວຽກງານລ້ຽງສັດ, ສັດຕະວະແພດ ແລະ ປະມົງ ຂອງຂະແໜງກະສິກຳ ແລະ ສິ່ງແວດລ້ອມ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ໃຫ້ໄດ້ຮັບຜົນສຳເລັດຕາມຄາດໝາຍທີ່ວາງໄວ້ ພ້ອມທັງຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ;

3. ຊີ້ນຳ, ຄຸ້ມຄອງ ດ້ານເຕັກນິກ, ວິຊາການ ຕາມການແບ່ງຂັ້ນ, ຄວາມຮັບຜິດຊອບ ແລະ ແບ່ງສິດຕາມສາຍຕັ້ງໃນການຕົກລົງບັນຫາຢ່າງລະອຽດ, ຈະແຈ້ງ ນັບແຕ່ສູນກາງລົງຮອດທ້ອງຖິ່ນ ຕາມກົດໝາຍ ແລະ ລະບຽບການ ທີ່ວາງອອກ;

4. ຄຸ້ມຄອງ, ນຳໃຊ້ພະນັກງານ ແລະ ຊັບສິນຂອງລັດ ເພື່ອຈັດຕັ້ງປະຕິບັດພາລະບົດບາດ ແລະ ໜ້າທີ່ຕາມຄວາມຮັບຜິດຊອບ ຂອງຕົນ ຕາມກົດໝາຍ ແລະ ລະບຽບການ ກຳນົດໄວ້;

5. ອອກ ຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ, ມາດຕະການ, ມາດຕະຖານເຕັກນິກ, ຄູ່ມື ແລະ ຂໍ້ມູນຂ່າວສານ ກ່ຽວກັບການລ້ຽງສັດ, ສັດຕະວະແພດ ແລະ ປະມົງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

6. ອອກ, ໂຈະ ຫຼື ຖອນໃບຢັ້ງຢືນມາດຕະຖານ ການຜະລິດ, ປຸງແຕ່ງຂັ້ນຕົ້ນ, ບໍລິການ, ວິໄຈພະຍາດ, ຄຸນນະພາບອາຫານສັດ, ຢາສັດຕະວະແພດ, ການຢັ້ງຢືນສຸຂະພາບ ແລະ ສຸຂານາໄມ ຂອງສັດ ແລະ ສັດນ້ຳ;

7. ອອກ, ໂຈະ ຫຼື ຖອນ ໃບທະບຽນ ແນວພັນສັດ, ຄລີນິກປິ່ນປົວສັດ ແລະ ໃບຢັ້ງຢືນເຕັກນິກວິຊາການລົງທຶນ ດ້ານການລ້ຽງສັດ, ສັດຕະວະແພດ ແລະ ປະມົງ ຕາມກົດໝາຍ ແລະ ລະບຽບການ;

8. ສະເໜີລັດຖະມົນຕີ ຮັບເອົາການລົງທຶນ, ອອກ, ໂຈະ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດ ດ້ານການລ້ຽງສັດ, ສັດຕະວະແພດ, ປະມົງ ແລະ ການປຸງແຕ່ງຂັ້ນຕົ້ນ; ໃບອະນຸຍາດດຳເນີນທຸລະກິດສຸຂານາໄມ, ສູນກັກກັນສັດ; ໃບອະນຸຍາດນຳເຂົ້າ ສັດ-ສັດນ້ຳ ແລະ ຜະລິດຕະພັນສັດ-ສັດນ້ຳ;

9. ສະເໜີລັດຖະມົນຕີ ອອກ, ໂຈະ ຫຼື ຍົກເລີກ ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ນິຕິກຳ ຂອງອົງການຄຸ້ມຄອງວຽກງານລ້ຽງສັດ, ສັດຕະວະແພດ ແລະ ປະມົງ ຂັ້ນລຸ່ມຂອງຕົນ ທີ່ຂັດກັບກົດໝາຍ ແລະ ລະບຽບການ;

10. ອະນຸຍາດໃຫ້ຫົວໜ່ວຍວິຊາການ ຫຼື ຜູ້ບໍລິການ ກ່ຽວກັບການລ້ຽງສັດ, ສັດຕະວະແພດ ແລະ ປະມົງດຳເນີນການບໍລິການ ແລະ ອອກໃບຢັ້ງຢືນດ້ານວິຊາການສະເພາະໃດໜຶ່ງ ແທນອົງການຄຸ້ມຄອງວຽກງານລ້ຽງສັດ, ສັດຕະວະແພດ ແລະ ປະມົງ;

11. ສະເໜີປະຕິບັດມາດຕະການ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ກັບວຽກງານລ້ຽງສັດ ສັດຕະວະແພດ ແລະ ປະມົງ;

12. ສະເໜີປັບປຸງກົງຈັກການຈັດຕັ້ງຂອງຕົນ ຕໍ່ກະຊວງກະສິກຳ ແລະ ສິ່ງແວດລ້ອມ ກ່ຽວກັບການສ້າງຕັ້ງ, ປັບປຸງ ຫຼື ຍຸບເລີກ ບັນດາກົງຈັກການຈັດຕັ້ງ ທີ່ຢູ່ໃນຄວາມຮັບຜິດຊອບຂອງກົມ ຕາມການແບ່ງຂັ້ນຄຸ້ມຄອງ, ການກຳນົດຕຳແໜ່ງງານ ຕາມທິດກະທັດຮັດ, ເຂັ້ມແຂງ ແລະ ມີປະສິດທິພາບ;

13. ຄົ້ນຄວ້າ, ນຳສະເໜີແຕ່ງຕັ້ງ, ບັນຈຸ-ສັບຊ້ອນ, ຈັດວາງບຸກຄະລາກອນ, ເລື່ອນຊັ້ນ-ຂັ້ນເງິນເດືອນ, ຍ້ອງຍໍ ຍົກຍ້າຍ, ປົດຕຳແໜ່ງ, ປະຕິບັດວິໄນຕໍ່ພະນັກງານພາຍໃນກົມ ຕາມລະບຽບການທີ່ໄດ້ກຳນົດໄວ້;

14. ຮຽກໂຮມພະນັກງານນຳພາ-ຄຸ້ມຄອງ ແລະ ນັກວິຊາການ ໃນຄວາມຮັບຜິດຊອບຂອງຕົນ ເຂົ້າຮ່ວມກອງປະຊຸມ ຫຼື ລາຍງານສ່ອງແສງວຽກງານເປັນແຕ່ລະໄລຍະ, ເຂົ້າຮ່ວມງານວາງສະແດງສິນຄ້າກະສິກຳ ແລະ ກົນຈັກກະສິກຳ, ຕະຫຼາດນັດ, ຝຶກອົບຮົມ, ສຳມະນາວິຊາການ ແລະ ລົງເຮັດວຽກຢູ່ທ້ອງຖິ່ນ-ຮາກຖານ, ເຂົ້າຮ່ວມກອງປະຊຸມແລກປ່ຽນບົດຮຽນ ແລະ ການເຈລະຈາ ກ່ຽວກັບວຽກງານ ລ້ຽງສັດ, ສັດຕະວະແພດ ແລະ

ປະມົງ ກັບຕ່າງປະເທດ ຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານ ຕາມທີ່ໄດ້ກຳນົດໃນລະບຽບການທີ່ກ່ຽວຂ້ອງ;

15. ພົວພັນ, ປະສານສົມທົບກັບ ຫ້ອງການ, ບັນດາກົມ, ສະຖາບັນ, ກອງເລຂາຄະນະກຳມະການແມ່ນ້ຳຂອງແຫ່ງຊາດ, ຫົວໜ່ວຍວິຊາການລະດັບສອງ ອ້ອມຂ້າງກະຊວງ ແລະ ຂະແໜງສາຍຕັ້ງ ຂອງຕົນຢູ່ທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດວຽກງານ ລ້ຽງສັດ ແລະ ການປະມົງ ໃຫ້ໄດ້ຮັບຜົນສຳເລັດຕາມຄາດໝາຍທີ່ວາງໄວ້;
16. ປະຕິບັດສິດອື່ນ ຕາມທີ່ກຳນົດໄວ້ໃນນິຕິກຳອື່ນ ແລະ ການມອບໝາຍຂອງລັດຖະມົນຕີ, ຮອງລັດຖະມົນຕີຜູ້ຊີ້ນຳ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

### ມາດຕາ 5 ໂຄງປະກອບກົງຈັກ

ກົມລ້ຽງສັດ ແລະ ການປະມົງ ມີໂຄງປະກອບກົງຈັກ ດັ່ງນີ້:

1. ພະແນກສັງລວມ;
2. ພະແນກແຜນການ ແລະ ການຮ່ວມມື;
3. ພະແນກລະບຽບການ ແລະ ສຸຂານາໄມ;
4. ພະແນກລ້ຽງສັດ;
5. ພະແນກສັດຕະວະແພດ;
6. ພະແນກປະມົງ;
7. ສູນວິໄຈພະຍາດສັດ;
8. ສູນຜະລິດຢາສັດຕະວະແພດ;
9. ສູນມາດຕະຖານ ແລະ ວິໄຈອາຫານສັດ;
10. ສູນພັດທະນາການປະມົງ.

### ມາດຕາ 6 ໂຄງປະກອບດ້ານບຸກຄະລາກອນ

ກົມລ້ຽງສັດ ແລະ ການປະມົງ ມີໂຄງປະກອບດ້ານບຸກຄະລາກອນ ດັ່ງນີ້:

1. ຫົວໜ້າກົມ ຈຳນວນ 01 ທ່ານ ຮັບຜິດຊອບຕໍ່ ລັດຖະມົນຕີ ແລະ ຮອງລັດຖະມົນຕີ ຜູ້ຊີ້ນຳຂົງເຂດວຽກງານ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງ ໃນການປະຕິບັດວຽກງານ ຂອງຕົນ.

    ໃນເວລາຫົວໜ້າກົມ ຕິດຂັດ ຕ້ອງມອບສິດໃຫ້ຮອງຫົວໜ້າກົມ ທ່ານໃດໜຶ່ງ ຮັກສາການແທນ.
2. ຮອງຫົວໜ້າກົມ ຈຳນວນໜຶ່ງ ຊ່ວຍຫົວໜ້າກົມ ຊີ້ນຳວຽກງານໃດໜຶ່ງ ຕາມການແບ່ງງານ ແລະ ການມອບໝາຍ; ຮັບຜິດຊອບຕໍ່ຫົວໜ້າກົມ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງ ຂອງວຽກງານທີ່ຕົນຊີ້ນຳ;

    ຮອງຫົວໜ້າກົມ ຜູ້ຮັກສານການແທນ ຕ້ອງລາຍງານວຽກງານທີ່ໄດ້ຈັດຕັ້ງປະຕິບັດ ໃນໄລຍະຮັກສາການການແທນນັ້ນ ໃຫ້ຫົວໜ້າກົມ ພາຍຫຼັງກັບມາປະຈຳການ.
3. ຫົວໜ້າພະແນກ ແລະ ທຽບເທົ່າ, ຮອງຫົວໜ້າພະແນກ ແລະ ທຽບເທົ່າ ແລະ ລັດຖະກອນວິຊາການ ຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ.

    ສຳລັບ ການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ແມ່ນປະຕິບັດ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ໜ້າທີ່ ຂອງບັນດາພະແນກ ແລະ ສູນ

**ມາດຕາ 7 ໜ້າທີ່ ຂອງພະແນກສັງລວມ**

ພະແນກສັງລວມ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ປັບປຸງ ພາລະບົດບາດ, ຕຳແໜ່ງງານ, ກຳນົດແຜນກໍ່ສ້າງບຸກຄະລາກອນ ຂອງບັນດາພະແນກ ແລະ ທຽບເທົ່າ ທີ່ຂຶ້ນກັບກົມລ້ຽງສັດ ແລະ ການປະມົງ ເພື່ອນຳສະເໜີຂັ້ນເທິງ ພິຈາລະນາ;
2. ຄຸ້ມຄອງ, ຕິດຕາມ ແລະ ປະເມີນຜົນ ພະນັກງານ-ລັດຖະກອນ, ອາສາສະໝັກ, ຊ່ຽວຊານພາຍໃນ ແລະ ຕ່າງປະເທດ ພ້ອມທັງຄົ້ນຄວ້າ ແລະ ນຳສະເໜີ ການປະຕິບັດນະໂຍບາຍເລື່ອນຊັ້ນ-ຂັ້ນ ເງິນເດືອນ, ເລື່ອນຕຳແໜ່ງ, ຍ້ອງຍໍ ແລະ ປະຕິບັດວິໄນ ຕໍ່ພະນັກງານ-ລັດຖະກອນ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງກົມ ຕາມກົດໝາຍ ແລະ ລະບຽບການ;
3. ເປັນໃຈກາງປະສານງານ ແລະ ຮຽກໂຮມປະຊຸມ ບັນດາພະແນກ ແລະ ສູນ ແລະ ຮ່ວມລົງເຄື່ອນໄຫວທ້ອງຖິ່ນ ກະກຽມບົດບັນທຶກ, ບົດລາຍງານ, ບົດຄວາມ, ບົດໂອ້ລົມ ແລະ ພິທີການ ຕິດຕາມ ແລະ ສັງລວມບົດລາຍງານ ການຈັດຕັ້ງປະຕິບັດແຕ່ລະໜ້າວຽກ ຕາມລະບຽບການ;
4. ຄຸ້ມຄອງ, ຈັດຕັ້ງປະຕິບັດ ແລະ ສະຫຼຸບລາຍງານ ວຽກງານລົງທຶນ ຂອງພາກເອກກະຊົນ ດ້ານການລ້ຽງສັດ ສັດຕະວະແພດ ແລະ ການປະມົງ ພ້ອມທັງຕິດຕາມ, ກວດກາ ແລະ ປະເມີນຜົນ ໃຫ້ໄດ້ຮັບຜົນສຳເລັດ;
5. ຄຸ້ມຄອງ ແລະ ຕິດຕາມ ການຈໍລະຈອນ ເອກະສານ ຂາເຂົ້າ-ຂາອອກ ຜ່ານປະຕູດຽວ ດ້ວຍລະບົບທັນສະໄໝ (E-office), ຄຸ້ມຄອງຕາປະທັບ, ສຳເນົາເປັນເອເລັກໂທຣນິກຟາຍ ເກັບມ້ຽນເອກະສານ ຢ່າງເປັນລະບົບ; ກວດກາ ແລະ ຢັ້ງຢືນ ຄວາມຖືກຕ້ອງຂອງເອກະສານຕ່າງໆ ກ່ອນນຳສະເໜີຄະນະກົມພິຈາລະນາ;
6. ສັງລວມ, ຕິດຕາມ ແລະ ຄຸ້ມຄອງ ການເງິນ, ການບັນຊີ ໃນງົບປະມານ ການລົງທຶນຂອງລັດ, ທຶນຊ່ວຍເຫຼືອ ແລະ ທຶນກູ້ຢືມ ພ້ອມທັງສ້າງ ແລະ ປັບປຸງ ຖານຂໍ້ມູນວັດຖຸ-ຊັບສິນ ຂອງລັດ ທີ່ຂຶ້ນກັບກົມລ້ຽງສັດ ແລະ ການປະມົງ;
7. ສັງລວມ, ຕິດຕາມ, ກວດກາ ບັນຊີຊັບສິນ ຂອງລັດ ແລະ ບັນດາໂຄງການຊ່ວຍເຫຼືອ ແລະ ກູ້ຢືມ ທີ່ກຳລັງຈັດຕັ້ງປະຕິບັດ ແລະ ກ່ອນສິ້ນສຸດໂຄງການ 03 ເດືອນ ທີ່ຂຶ້ນກັບກົມ ໂດຍສອດຄ່ອງກັບກົດໝາຍຊັບສິນ ຂອງລັດ ເພື່ອສະຫຼຸບລາຍງານໃຫ້ຫ້ອງການກະຊວງກະສິກຳ ແລະ ສິ່ງແວດລ້ອມ ປີລະ 02 ຄັ້ງ ໄລຍະ 06 ເດືອນຕົ້ນປີ ລາຍງານວັນທີ 20 ມິຖຸນາ ແລະ 06 ເດືອນທ້າຍປີ ລາຍງານວັນທີ 20 ທັນວາ;
8. ຕິດຕາມ ແລະ ກວດກາ ການນຳໃຊ້, ການສ້ອມແປງ, ການບຳລຸງຮັກສາ, ການກໍ່ສ້າງ, ການຈັດຊື້ ແລະ ການຊຳລະສະສາງ ພາຫະນະ, ເຄື່ອງໃຊ້ໄຟຟ້າ, ເຄື່ອງກົນຈັກ, ຕຶກອາຄານ ແລະ ວັດຖຸອຸປະກອນຕ່າງໆ ທີ່ຢູ່ພາຍໃຕ້ການຄຸ້ມຄອງ ຂອງກົມລ້ຽງສັດ ແລະ ການປະມົງ;
9. ຈັດຕັ້ງປະຕິບັດວຽກງານສົ່ງເສີມບົດບາດຍິງ-ຊາຍ ແລະ ພັດທະນາຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ຂອງກົມລ້ຽງສັດ ແລະ ການປະມົງ;
10. ຄຸ້ມຄອງ, ເຜີຍແຜ່ ຂໍ້ມູນຂ່າວສານການເຄື່ອນໄຫວວຽກງານວິຊາສະເພາະ ຂອງຄະນະກົມ, ບັນດາພະແນກ ແລະ ໂຄງການທີ່ຂຶ້ນກັບກົມ ເຜີຍແຜ່ລົງເວບໄຊ ແລະ ກະດານຂ່າວ ຂອງກົມ ຢ່າງເປັນປົກກະຕິ;
11. ປະສານສົມທົບກັບບັນດາພະແນກ ແລະ ສູນ ຂອງກົມ ໃນການສັງລວມ, ສະຫຼຸບລາຍງານວຽກງານພົ້ນເດັ່ນ, ສັງລວມ, ສະຫຼຸບລາຍງານ ການເຄື່ອນໄຫວການຈັດຕັ້ງປະຕິບັດວຽກງານຄຸ້ມຄອງບໍລິຫານ, ວຽກງານ

ຄຸ້ມຄອງແຫຼ່ງລາຍຮັບ-ລາຍຈ່າຍ, ບັນຊີຊັບສິນ, ພິທີການ, ເລຂານຸການ ແລະ ວຽກງານ ຂອງກົມ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈຳປີ, ກາງສະໄໝ ແລະ 5 ປີ ໃຫ້ຂັ້ນເທິງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃຫ້ຖືກຕ້ອງ, ຄົບຖ້ວນ, ເປັນປົກກະຕິ ແລະ ທັນເວລາ;

12. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 8 ໜ້າທີ່ ຂອງພະແນກແຜນການ ແລະ ການຮ່ວມມື**

ພະແນກແຜນການ ແລະ ການຮ່ວມມື ມີໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍຍຸດທະສາດ, ແຜນພັດທະນາກະສິກຳ ແລະ ສິ່ງແວດລ້ອມ ໃຫ້ເປັນແຜນການ, ແຜນດຳເນີນງານ ແລະ ໂຄງການພັດທະນາວຽກງານລ້ຽງສັດ, ສັດຕະວະແພດ ແລະ ປະມົງ ທັງໄລຍະສັ້ນ, ກາງ ແລະ ໄລຍະຍາວ;
2. ຄົ້ນຄ້ວາສ້າງ ຮ່າງ ຍຸດທະສາດ, ແຜນການ, ແຜນງານ ແລະ ໂຄງການ ຜະລິດສັດ ແລະ ສັດນ້ຳ ເພື່ອຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ, ການຜະລິດສັດ ແລະ ສັດນ້ຳ ເປັນສິນຄ້າຕິດພັນກັບການປຸງແຕ່ງ ເພື່ອສົ່ງອອກ;
3. ສັງລວມ, ວິເຄາະ, ວິໄຈ ແລະ ຊຸກຍູ້ຕິດຕາມ ສະພາບການຈັດຕັ້ງແຜນພັດທະນາ ການລ້ຽງສັດ, ສັດຕະວະແພດ ແລະ ການປະມົງ ໃນແຕ່ລະໄລຍະ ທີ່ຕິດພັນກັບອັດຕາການເຕີບໂຕ ຂອງລວມຍອດຜະລິດຕະພັນພາຍໃນ (GDP); ເປົ້າໝາຍການພັດທະນາແບບຍືນຍົງ (SDGs), ການເຕີບໂຕສີຂຽວ (Green Growth);
4. ເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຄົ້ນຄວ້າກຳນົດລາຍການ ແລະ ບັນດາມາດຕະການສົ່ງເສີມການຜະລິດສິນຄ້າ ກ່ຽວກັບສັດ ແລະ ສັດນ້ຳ ທີ່ມີທ່າແຮງ, ປົກປ້ອງຜູ້ຜະລິດພາຍໃນ ພ້ອມທັງວາງແຜນດຸ່ນດ່ຽງການຜະລິດ ເພື່ອເປັນຂໍ້ມູນໃນການຈໍລະຈອນສິນຄ້າ, ສ້າງສຳພັນເສດຖະກິດ ໃນຂອບເຂດທົ່ວປະເທດ;
5. ພົວພັນຮ່ວມມື, ຂົນຂວາຍ, ຍາດແຍ່ງການຊ່ວຍເຫຼືອ ແລະ ການລົງທຶນຈາກພາຍໃນ, ຕ່າງປະເທດ ບົນພື້ນຖານກົດໝາຍ ແລະ ລະບຽບການກຳນົດໄວ້ ເພື່ອພັດທະນາຂະແໜງການລ້ຽງສັດ ແລະ ການປະມົງແຕ່ສູນກາງຮອດທ້ອງຖິ່ນ ພ້ອມທັງປະຕິບັດພັນທະ ຕໍ່ສົນທິສັນຍາສາກົນ ທີ່ປະເທດເຮົາເປັນພາຄີຢ່າງຕັ້ງໜ້າ;
6. ຄຸ້ມຄອງ, ຕິດຕາມ, ກວດກາປະເມີນຜົນ ສັງລວມ ແລະ ສະຫຼຸບລາຍງານ ການພົວພັນຮ່ວມມື ໃນວຽກງານອາຊຽນ, ອົງການຈັດຕັ້ງສາກົນ, ຄູ່ຮ່ວມພັດທະນາ, ການຮ່ວມມືສອງຝ່າຍ, ຫຼາຍຝ່າຍ ໃນຂະແໜງການລ້ຽງສັດ, ການສັດຕະວະແພດ ແລະ ການປະມົງ ໃຫ້ເປັນລະບົບ;
7. ໃຫ້ຄຳແນະນຳໃນການສ້າງບົດສະເໜີໂຄງການ ແລະ ຈັດສັນ, ກວດຜ່ານແຜນງົບປະມານໂຄງການລົງທຶນຂອງລັດ ພາກ 67 ລວມທັງທຶນກູ້ຢືມ, ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ ຈາກຕ່າງປະເທດ ແລະ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ (ສສງ) ທີ່ຍົກລະດັບມາຈາກໂຄງການລ້ຽງສັດ ພ້ອມທັງຊຸກຍູ້, ຕິດຕາມ, ປະເມີນຜົນ ແລະ ສະຫຼຸບລາຍງານ ການຈັດຕັ້ງປະຕິບັດບັນດາໂຄງການ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ແລະ ປະຈຳປີ;
8. ສ້າງ ແລະ ພັດທະນາ ຖານຂໍ້ມູນສະຖິຕິວຽກງານ ລ້ຽງສັດ, ສັດຕະວະແພດ ແລະ ປະມົງ ທີ່ທັນເຂົ້າສູ່ລະບົບເຕັກໂນໂລຊີທີ່ທັນສະໄໝ ພ້ອມທັງເຜີຍແຜ່ເປັນລະບົບ ສາມາດເຊື່ອມໂຍງພາຍໃນ ແລະ ພາກພື້ນ;

13. ປະສານສົມທົບກັບບັນດາພະແນກ, ສູນ ແລະ ພາກສ່ວນກ່ຽວຂ້ອງ ເພື່ອເຮັດໜ້າທີ່ເປັນເສນາທິການໃຫ້ຄະນະກົມ ໃນວຽກງານແຜນການ ແລະ ການຮ່ວມມື ຂອງກົມ;

14. ສັງລວມ, ສະຫຼຸບລາຍງານ ການຈັດຕັ້ງປະຕິບັດວາລະແຫ່ງຊາດ, ການຈັດຕັ້ງປະຕິບັດວຽກງານຮອບດ້ານ ກ່ຽວກັບວຽກງານແຜນການ ແລະ ການຮ່ວມມື ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈຳປີ, ກາງສະໄໝ ແລະ 5 ປີ ໃຫ້ຂັ້ນເທິງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃຫ້ຖືກຕ້ອງ, ຄົບຖ້ວນ, ເປັນປົກກະຕິ ແລະ ທັນເວລາ;

9. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 9 ໜ້າທີ່ ຂອງພະແນກລະບຽບການ ແລະ ສຸຂານາໄມ**

ພະແນກລະບຽບການ ແລະ ສຸຂານາໄມ ມີໜ້າທີ່ ດັ່ງນີ້:

1. ສຶກສາ, ຄົ້ນຄວ້າ ແລະ ນຳສະເໜີ ນະໂຍບາຍ ແລະ ມາດຕະການ ສະໜັບສະໜູນການຜະລິດສັດ, ສັດນ້ຳ, ຜະລິດຕະພັນສັດ ແລະ ສັດນ້ຳ ເປັນສິນຄ້າ;
2. ສຶກສາ, ຄົ້ນຄວ້າ, ສ້າງ ແລະ ປັບປຸງ ກົດໝາຍ ແລະ ນິຕິກຳລຸ່ມກົດໝາຍ ກ່ຽວກັບວຽກງານລ້ຽງສັດ, ສັດຕະວະແພດ ແລະ ປະມົງ ພ້ອມທັງຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດ ກົດໝາຍ, ລະບຽບການ ທີ່ໄດ້ປະກາດໃຊ້ ແຕ່ລະໄລຍະ;
3. ຄົ້ນຄວ້າ, ສຶກສາ ບັນດາສັນຍາ, ສົນທິສັນຍາ, ກົດບັດ, ຂໍ້ຕົກລົງ, ມາດຕະຖານ ແລະ ມາດຕະການຕ່າງໆ ທີ່ກ່ຽວຂ້ອງກັບການລ້ຽງສັດ, ສັດຕະວະແພດ ແລະ ປະມົງ ລວມທັງສຸຂານາໄມ ຂອງຜະລິດຕະພັນສິນຄ້າ ກ່ຽວກັບສັດ ແລະ ການປະມົງ ເພື່ອຜັນຂະຫຍາຍມາເປັນນິຕິກຳ, ລະບຽບການ ແລະ ມາດຕະການ;
4. ເປັນໃຈກາງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າ, ສ້າງ, ປັບປຸງ ບັນດາມາດຕະຖານເຕັກນິກ ໃນຂະແໜງລ້ຽງສັດ ແລະ ການປະມົງ ພ້ອມທັງຕິດຕາມ, ກວດກາ ການຈັດຕັ້ງປະຕິບັດ;
5. ສ້າງ ແລະ ພັດທະນາ ລະບົບຕິດຕາມ, ກວດກາ ແລະ ຢັ້ງຢືນ ຄຸນນະພາບ ຂອງສັດ, ສັດນ້ຳ, ຜະລິດຕະພັນສັດ, ສັດນ້ຳ;
6. ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ກຳນົດ, ຂຶ້ນທະບຽນ ແລະ ສະເໜີອອກອະນຸຍາດ ກາໝາຍຄຸນນະພາບ ຜະລິດຕະພັນສັດ ແລະ ສັດນ້ຳ ພ້ອມທັງຕິດຕາມ, ກວດກາ ແລະ ປະເມີນຜົນ;
7. ຄົ້ນຄວ້າສັງລວມບັນດາມາດຕະຖານເງື່ອນໄຂດ້ານເຕັກນິກ ແລະ ຄຸນນະພາບຂອງສິນຄ້າ ທີ່ຕິດພັນກັບວຽກງານສຸຂານາໄມ ແລະ ສຸຂານາໄມພືດ ພ້ອມທັງປະສານງານກັບພາກສ່ວນກ່ຽວຂ້ອງ ເພື່ອເຈລະຈາເປີດຕະຫຼາດ ກັບປະເທດຄູ່ຄ້າ;
8. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າ, ປັບປຸງ ກົນໄກ, ຂັ້ນຂອດ ແລະ ສິ່ງກີດຂວາງ ທີ່ເປັນອຸປະສັກໃຫ້ແກ່ການລົງທຶນ ແລະ ການດຳເນີນທຸລະກິດ ກ່ຽວກັບການລ້ຽງສັດ, ສັດຕະວະແພດ ແລະ ການປະມົງ;
9. ປະກອບຄຳເຫັນ, ໃຫ້ການປຶກສາ ຕໍ່ກັບວຽກງານສຸຂານາໄມ ເພື່ອເອື້ອອຳນວຍຄວາມສະດວກ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;
10. ຕິດຕາມ, ກວດກາ ແລະ ຊຸກຍູ້ ບັນດາຫົວໜ່ວຍທຸລະກິດ ກ່ຽວກັບການລ້ຽງສັດ, ສັດຕະວະແພດ ແລະ ການປະມົງ ໃນການຈັດຕັ້ງປະຕິບັດບັນດາມາດຕະຖານ ແລະ ມາດຕະການດ້ານສຸຂານາໄມ;
11. ສ້າງຖານຂໍ້ມູນມາດຕະຖານ ແລະ ລະບຽບການ ກ່ຽວກັບການລ້ຽງສັດ, ສັດຕະວະແພດ, ປະມົງ ແລະ ລະບຽບການທີ່ກ່ຽວຂ້ອງ ເພື່ອເປັນບ່ອນອີງໃນການເຈລະຈາເປີດຕະຫຼາດ ກັບບັນດາປະເທດຄູ່ຄ້າ;
12. ສະກັດກັ້ນການກະທຳທີ່ລະເມີດຕໍ່ກົດໝາຍ ແລະ ລະບຽບການ ກ່ຽວກັບການລ້ຽງສັດ, ສັດຕະວະແພດ ແລະ ປະມົງ ພ້ອມທັງລາຍງານຕໍ່ພາກສ່ວນທີ່ກ່ຽວຂ້ອງ;

13. ສັງລວມ, ສະຫຼຸບລາຍງານ ການຈັດຕັ້ງປະຕິບັດວຽກງານຮອບດ້ານ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈຳປີ, ກາງສະໄໝ ແລະ 5 ປີ ກ່ຽວກັບວຽກງານລະບຽບການ ແລະ ສຸຂານາໄມ ໃຫ້ຂັ້ນເທິງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃຫ້ຖືກຕ້ອງ, ຄົບຖ້ວນ, ເປັນປົກກະຕິ ແລະ ທັນເວລາ;
14. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 10 ໜ້າທີ່ ຂອງພະແນກລ້ຽງສັດ**

ພະແນກລ້ຽງສັດ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ກຳນົດ ຮ່າງ ນະໂຍບາຍ, ແຜນຍຸດທະສາດ, ແຜນງານ, ຂໍ້ຕົກລົງ, ແຈ້ງການ, ຄຳສັ່ງ, ຄຳແນະນຳ ກ່ຽວກັບວຽກງານການລ້ຽງສັດ;
2. ໂຄສະນາ, ເຜີຍແຜ່, ຕິດຕາມກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານການລ້ຽງສັດ;
3. ຄຸ້ມຄອງ ແລະ ພັດທະນາ ການລ້ຽງ ສັດໃຫຍ່, ສັດນ້ອຍ ແລະ ສັດປີກ, ເຜິ້ງ ແລະ ແມງໄມ້ກິນໄດ້, ສ້າງຄູ່ມືດ້ານການລ້ຽງ ແລະ ສ້າງກອງທຶນພັດທະນາດ້ານການລ້ຽງສັດ;
4. ຊຸກຍູ້, ພັດທະນາ ທົ່ງຫຍ້າທຳມະຊາດ ແລະ ທົ່ງຫຍ້າແນວພັນປັບປຸງ ເຂົ້າໃນການລ້ຽງສັດ, ສົ່ງເສີມການຜະລິດເມັດພັນພືດອາຫານສັດ ແລະ ສຶກສາສິ່ງເສດເຫຼືອໃນການຜະລິດກະສິກຳນຳມາປຸງແຕ່ງເພື່ອນຳໃຊ້ເຂົ້າໃນການລ້ຽງສັດ;
5. ຄົ້ນຄວ້າ ແລະ ປະກອບຄຳເຫັນດ້ານວິຊາການ ກ່ຽວກັບການສະເໜີໂຄງການລົງທຶນ ຫຼື ການດຳເນີນທຸລະກິດ ກ່ຽວກັບການລ້ຽງສັດ ແລະ ຮ່ວມກັບຄະນະກຳມະການ ໃນການກວດກາ-ຮັບຮອງມາດຕະຖານຟາມ ຮັບຮອງບົດວິພາກເສດຖະກິດເຕັກນິກໃນການລ້ຽງສັດ ແລະ ການຢັ້ງຢືນກຳມະພັນສັດ ແລະ ພືດອາຫານສັດ;
6. ຊຸກຍູ້ການກຳນົດເຂດການລ້ຽງສັດ ແລະ ການຄຸ້ມຄອງ ຟາມ, ກຸ່ມ, ສະມາຄົມ, ສະຫະກອນ, ຄອບຄົວຕົວແບບ ລວມທັງການສ້າງວິຊາຊີບ ກ່ຽວກັບການລ້ຽງສັດ ແລະ ການຜະລິດເປັນສິນຄ້າ ເພື່ອສົ່ງອອກ;
7. ພັດທະນາ, ສ້າງຖານຂໍ້ມູນສະຖິຕິສັດ ແລະ ເຜີຍແຜ່ຂໍ້ມູນຂ່າວສານ ວຽກງານການລ້ຽງສັດ ຢ່າງເປັນລະບົບ ກ່ຽວກັບຟາມລ້ຽງສັດ, ສວນສັດ, ເຂດລ້ຽງສັດ, ແຫຼ່ງແນວພັນສັດພື້ນເມືອງພັນທີ່ດີ ຕະຫຼອດຮອດການລ້ຽງເຜິ້ງ ແລະ ແມງໄມ້ທີ່ກິນໄດ້;
8. ຊຸກຍູ້, ຕິດຕາມ, ກວດກາ ແລະ ເກັບກຳສັງລວມຂໍ້ມູນ ການຂຶ້ນທະບຽນຟາມສັດລ້ຽງ ຕາມຂັ້ນຄຸ້ມຄອງ ໃຫ້ຖືກຕ້ອງຄົບຖ້ວນ ຕາມມາດຕະຖານ ແລະ ເຕັກນິກ ກຳນົດໄວ້;
9. ເກັບກຳສັງລວມຂໍ້ມູນສະຖິຕິ ກ່ຽວກັບຟາມລ້ຽງສັດ ໃຫ້ລະອຽດຄົບຖ້ວນ ພ້ອມທັງສັງລວມປະລິມານການຜະລິດ ແລະ ປະລິມານຄວາມຕ້ອງການບໍລິໂພກຢູ່ພາຍໃນປະເທດໃນແຕ່ລະປີ ເພື່ອດຸ່ນດ່ຽງດ້ານສະບຽງອາຫານ ແລະ ແນວພັນສັດລ້ຽງ ແລະ ເພື່ອກຳນົດລາຍການ ແລະ ມາດຕະການ ຊຸກຍູ້ສົ່ງເສີມການຜະລິດພາຍໃນ ທົດແທນການນຳເຂົ້າ ແລະ ຜະລິດເປັນສິນຄ້າເພື່ອສົ່ງອອກ;
10. ຊຸກຍູ້ສະໜັບສະໜູນການພັດທະນາ, ປົກປັກຮັກສາ ແລະ ນຳໃຊ້ ແນວພັນສັດ ລວມທັງນ້ຳເຊື້ອ ແລະ ໄນໂຕເຈນແຫຼວ, ໂຕອ່ອນຂອງສັດ ແລະ ການພັດທະນາ ກ່ຽວກັບທົ່ງຫຍ້າລ້ຽງສັດ;
11. ຄົ້ນຄວ້າ, ພິຈາລະນາສະເໜີຈົດລິຂະສິດ, ຂຶ້ນທະບຽນ, ແນວພັນສັດ, ພືດອາຫານສັດ ແລະ ອຸປະກອນລ້ຽງສັດ ຮ່ວມກັບພະແນກລະບຽບການ ແລະ ສຸຂານາໄມ;
12. ຄຸ້ມຄອງ, ພັດທະນາ ວຽກງານຂຶ້ນທະບຽນພິມສັດລ້ຽງ ແລະ ພັດທະນາລະບົບການກວດສອບຍ້ອນຫຼັງປະຫວັດຂອງສັດລ້ຽງ ແລະ ຕະຫຼາດສັດລ້ຽງມີຊີວິດ ໃນຂອບເຂດທົ່ວປະເທດ;
13. ຄົ້ນຄວ້າ ແລະ ປະກອບຄຳເຫັນ ຮ່ວມກັບພະແນກສັດຕະວະແພດ ກ່ຽວກັບການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານສັດມີຊີວິດ, ແນວພັນສັດ, ຜະລິດຕະພັນສັດ ແລະ ອຸປະກອນການລ້ຽງສັດ; ຄົ້ນຄວ້າ ແລະ ປະ

ກອບຄຳເຫັນ ຮ່ວມກັບສູນມາດຕະຖານ ແລະ ວິໄຈອາຫານສັດ ກ່ຽວກັບການນຳເຂົ້າ, ສົ່ງອອກ ອາຫານສັດ ແລະ ອຸປະກອນບັນຈຸອາຫານສັດ;

14. ຄົ້ນຄວ້າ, ກຳນົດ, ດຸ່ນດ່ຽງການຜະລິດ ແລະ ຄິດໄລ່ໂຄງປະກອບລາຄາ, ຕົ້ນທຶນການຜະລິດສັດ ແລະ ຜະລິດຕະພັນສັດ ຂັ້ນຕົ້ນ;
15. ກວດກາ, ຕິດຕາມ ແລະ ສະກັດກັ້ນ ທຸກການກະທຳທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການລ້ຽງສັດ ພ້ອມທັງລາຍງານຕໍ່ພາກສ່ວນທີ່ກ່ຽວຂ້ອງ;
16. ຄຸ້ມຄອງວຽກງານລ້ຽງສັດ ທີ່ເປັນມິດກັບສິ່ງແວດລ້ອມ ເພື່ອໃຫ້ສາມາດປັບຕົວເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດ ແລະ ຄວບຄຸມການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວຈາກການລ້ຽງສັດ;
17. ສັງລວມ, ສະຫຼຸບລາຍງານ ການຈັດຕັ້ງປະຕິບັດວຽກງານຮອບດ້ານ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈຳປີ, ກາງສະໄໝ ແລະ 5 ປີ ໃຫ້ຂັ້ນເທິງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃຫ້ຖືກຕ້ອງ, ຄົບຖ້ວນເປັນປົກກະຕິ ແລະ ທັນເວລາ;
18. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 11 ໜ້າທີ່ ຂອງພະແນກສັດຕະວະແພດ**

ພະແນກສັດຕະວະແພດ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ກຳນົດ ຮ່າງ ນະໂຍບາຍ, ແຜນຍຸດທະສາດ, ແຜນງານ ແລະ ມາດຕະຖານດຳລັດ, ຂໍ້ຕົກລົງ, ແຈ້ງການ, ຄຳສັ່ງ, ຄຳແນະນຳ ກ່ຽວກັບວຽກງານສັດຕະວະແພດ;
2. ໂຄສະນາ, ເຜີຍແຜ່, ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານການສັດຕະວະແພດ;
3. ຄົ້ນຄວ້າ ແລະ ປະກອບຄຳເຫັນດ້ານວິຊາການ ກ່ຽວກັບການຂໍອະນຸຍາດລົງທຶນ, ການສ້າງສະຖານທີ່ກັກກັນສັດ, ໂຮງງານຜະລິດຢາສັດຕະວະແພດ, ສະຖານທີ່ບໍລິການປິ່ນປົວສັດ, ຮ້ານຈຳໜ່າຍຢາສັດຕະວະແພດ ແລະ ອຸປະກອນສັດຕະວະແພດ, ການສ້າງຕັ້ງໂຮງຂ້າສັດ, ໂຮງງານປຸງແຕ່ງຜະລິດຕະພັນສັດ ຂັ້ນຕົ້ນ, ສາງເຢັນ ແລະ ພາຫະນະໃນການຂົນສົ່ງ ລວມທັງການຂໍອະນຸຍາດນຳເຂົ້າ, ຈຳໜ່າຍເຄື່ອງຈັກ, ອາໄຫຼ່ກົນຈັກ ແລະ ເຄື່ອງມືອຸປະກອນຮັບໃຊ້;
4. ຄຸ້ມຄອງ, ຕິດຕາມ ແລະ ກວດກາປະເມີນຜົນ ວຽກງານກັກກັນສັດ, ດ່ານກວດກາສັດຕະວະແພດ, ໂຮງງານຜະລິດຢາສັດຕະວະແພດ, ສະຖານທີ່ບໍລິການປິ່ນປົວສັດ, ຮ້ານຈຳໜ່າຍຢາສັດຕະວະແພດ ແລະ ຜະລິດຕະພັນການສັດຕະວະແພດ, ໂຮງຂ້າສັດ, ໂຮງງານປຸງແຕ່ງ ຜະລິດຕະພັນສັດ ຂັ້ນຕົ້ນ, ສາງເຢັນ, ພາຫະນະໃນການຂົນສົ່ງ ລວມທັງຕະຫຼາດຂາຍຜະລິດຕະພັນສັດຂັ້ນຕົ້ນ ຕາມລະບົບເຕັກນິກ-ເຕັກໂນໂລຊີ, ມາດຕະຖານ, ການປະຕິບັດການປຸງແຕ່ງທີ່ດີ, ສຸຂານາໄມ ແລະ ຄວາມປອດໄພ, ການຫຸ້ມຫໍ່ ແລະ ອື່ນໆ;
5. ຄົ້ນຄວ້າ ແລະ ກຳນົດ ດ່ານກວດກາສັດຕະວະແພດ ໃນການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານສັດ, ຜະລິດຕະພັນສິນຄ້າ ກ່ຽວກັບສັດ ພ້ອມທັງກຳນົດຈຸດກວດກາຂອງເຂດປອດພະຍາດສັດ ແລະ ຈຸດກວດກາຊົ່ວຄາວພາຍໃນປະເທດ ໃນກໍລະນີເກີດພະຍາດລະບາດ ຫຼື ກໍລະນີທີ່ມີຄວາມສ່ຽງເກີດການລະບາດ;
6. ປະສານສົມທົບກັບພະແນກລ້ຽງສັດ ເພື່ອຄົ້ນຄວ້າ, ປະກອບຄຳເຫັນ ແລະ ປະກອບເອກະສານອະນຸມັດກ່ຽວກັບການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານສັດມີຊີວິດ, ແນວພັນສັດ ແລະ ຜະລິດຕະພັນສັດ, ອຸປະກອນສັດຕະວະແພດ;
7. ຄົ້ນຄວ້າ ແລະ ນຳສະເໜີ ອອກໃບຢັ້ງຢືນສຸຂະພາບສັດ ແລະ ໃບຢັ້ງຢືນສຸຂານາໄມຜະລິດຕະພັນສັດ;

8. ຄົ້ນຄວ້າການຂຶ້ນທະບຽນ ຢາສັດຕະວະແພດ, ຜະລິດຕະພັນການສັດຕະວະແພດ, ສານເຄມີສໍາລັບຜະລິດຢາສັດຕະວະແພດ ແລະ ເຊື້ອພັນພະຍາດສັດ; ໂຮງຂ້າສັດ, ໂຮງງານປຸງແຕ່ງຜະລິດຕະພັນສັດ ຂັ້ນຕົ້ນ, ສາງເຢັນ ລວມທັງພາຫະນະໃນການຂົນສົ່ງ;

9. ສ້າງ, ປັບປຸງ ແລະ ຈັດຕັ້ງປະຕິບັດ ລະບົບເຝົ້າລະວັງ, ກັນ ແລະ ຄວບຄຸມພະຍາດສັດ ລວມທັງການພັດທະນາລະບົບຄວາມປອດໄພ ທາງດ້ານຊີວະພາບຂອງການລ້ຽງສັດ;

10. ພັດທະນາວຽກງານລະບາດວິທະຍາສັດຕະວະແພດ, ວຽກງານເຝົ້າລະວັງ, ປະເມີນຄວາມສ່ຽງການແຜ່ລະບາດ ຂອງພະຍາດສັດ ແລະ ວາງມາດຕະການກັນ, ໂຕ້ຕອບ, ຄວບຄຸມພະຍາດລະບາດສັດ ແລະ ພະຍາດຕິດຕໍ່ຈາກສັດສູ່ຄົນ;

11. ຄົ້ນຄວ້າ ແລະ ສະເໜີຕໍ່ກະຊວງກະສິກໍາ ແລະ ສິ່ງແວດລ້ອມ ກ່ຽວກັບການສ້າງ ແລະ ຍົກເລີກ ເຂດປອດພະຍາດສັດ, ເຂດຄວບຄຸມ ແລະ ເຂດພະຍາດລະບາດສັດ; ນໍາສະເໜີ ອອກ, ໂຈະ ຫຼື ຖອນ ໃບຢັ້ງຢືນສຸຂານາໄມ, ໃບຢັ້ງຢືນການຜະລິດທີ່ດີ (GMP), ລະບົບວິເຄາະ, ຄວບຄຸມຈຸດອັນຕະລາຍ (HACCP), ການປະຕິບັດຫຼັກສຸຂະອານາໄມທີ່ດີ (GHP) ແລະ ໃບອະນຸຍາດດໍາເນີນກິດຈະການ;

12. ສ້າງ ແລະ ປັບປຸງ ຫຼັກສູດຝຶກອົບຮົມສັດຕະວະແພດ ແລະ ສັດຕະວະແພດບ້ານ ພ້ອມທັງຊຸກຍູ້ສົ່ງເສີມຕາໜ່າງການບໍລິການສັດຕະວະແພດ, ວິຊາຊີບສັດຕະວະແພດ ສ້າງຄູ່ມື, ຫຼັກສູດ ແລະ ຈັດຝຶກອົບຮົມກ່ຽວກັບການປຸງແຕ່ງ, ການນໍາໃຊ້ເຄື່ອງມື, ອຸປະກອນ ໃນການປຸງແຕ່ງໃຫ້ແກ່ວິຊາການສາຍຕັ້ງຂັ້ນທ້ອງຖິ່ນ ແລະ ຜູ້ປະກອບການ;

13. ຄົ້ນຄວ້າ ແລະ ກໍານົດ ບັນຊີລາຍຊື່ພະຍາດສັດທີ່ຈໍາເປັນຕ້ອງແຈ້ງ, ບັນຊີຢາສັດຕະວະແພດ ແລະ ລາຍການສານຊີວະພັນ-ເຄມີພັນ ພ້ອມທັງສັງລວມ ແລະ ລາຍງານຂໍ້ມູນ ກ່ຽວກັບການນໍາໃຊ້ຢາສັດຕະວະແພດ; ຄຸ້ມຄອງ, ສໍາຫຼວດ, ເກັບກໍາຂໍ້ມູນ ບັນດາໂຮງຂ້າສັດ, ໂຮງງານປຸງແຕ່ງຜະລິດຕະພັນສັດ ຂັ້ນຕົ້ນ, ສາງເຢັນ, ພາຫະນະໃນການຂົນສົ່ງ ລວມທັງຕະຫຼາດຂາຍຜະລິດຕະພັນສັດຂັ້ນຕົ້ນ ຢູ່ໃນຂອບເຂດທົ່ວປະເທດ;

14. ຄົ້ນຄວ້າ, ກໍານົດນະໂຍບາຍ, ມາດຕະຖານ, ເຕັກນິກ ຂອງໂຮງງານ ແລະ ການປຸງແຕ່ງ ແປຮູບຜະລິດຕະພັນສັດ ຂັ້ນຕົ້ນ, ໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ, ລະບົບສາງ, ຂະບວນການຜະລິດ, ການນໍາໃຊ້ເຄື່ອງມືອຸປະກອນຮັບໃຊ້ໃນການປຸງແຕ່ງ ລວມທັງສະຖານທີ່ວາງຂາຍຜະລິດຕະພັນສັດຂັ້ນຕົ້ນ ໂດຍປະຕິບັດຕາມມາດຕະຖານທີ່ກໍານົດ;

15. ຊຸກຍູ້ການສ້າງຕັ້ງສະພາສັດຕະວະແພດ, ສະມາຄົມສັດຕະວະແພດ ແລະ ກອງທຶນພັດທະນາດ້ານການຮັກສາສຸຂະພາບສັດ; ສ້າງ ແລະ ປັບປຸງ ຕາໜ່ງບໍລິການສັດຕະວະແພດຢູ່ແຕ່ລະຂັ້ນ ໃຫ້ໄດ້ມາດຕະຖານ ແລະ ທົ່ວເຖິງ;

16. ສັງລວມ, ສະຫຼຸບລາຍງານ ການຈັດຕັ້ງປະຕິບັດວຽກງານຮອບດ້ານ ປະຈໍາເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈໍາປີ, ກາງສະໄໝ ແລະ 5 ປີ ໃຫ້ຂັ້ນເທິງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃຫ້ຖືກຕ້ອງ, ຄົບຖ້ວນ, ເປັນປົກກະຕິ ແລະ ທັນເວລາ;

17. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

ມາດຕາ 12 ໜ້າທີ່ ຂອງພະແນກປະມົງ

ພະແນກປະມົງ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ກຳນົດ ຮ່າງ ນະໂຍບາຍ, ແຜນຍຸດທະສາດ, ແຜນງານ, ຂໍ້ຕົກລົງ, ແຈ້ງການ, ຄຳສັ່ງ, ຄຳແນະນຳ ກ່ຽວກັບວຽກງານການປະມົງ;
2. ເປັນເຈົ້າການ ຮ່າງ, ສ້າງ, ປັບປຸງ, ໂຄສະນາ ແລະ ເຜີຍແຜ່, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ກົດໝາຍ, ດຳລັດ, ຂໍ້ຕົກລົງ, ແຈ້ງການ, ຄຳສັ່ງ, ຄຳແນະນຳ ແລະ ລະບຽບການ ກ່ຽວກັບວຽກງານປະມົງ;
3. ສຳຫຼວດດ້ານນິເວດວິທະຍາ ແລະ ຊີວະວິທະຍາ ຂອງສັດນ້ຳ ເພື່ອວາງແຜນໃນການຄຸ້ມຄອງການປະມົງ;
4. ເປັນເຈົ້າການຄຸ້ມຄອງການຫາສັດນ້ຳ, ການຊົມໃຊ້ສັດນ້ຳ, ການປົກຮັກສາຊັບພະຍາກອນປະມົງແບບຍືນຍົງ ລວມທັງການຄຸ້ມຄອງການປະມົງໃນອ່າງເກັບນ້ຳ ແລະ ການພັດທະນາການລ້ຽງສັດນ້ຳ;
5. ເປັນເຈົ້າການ ປະສານສົມທົບກັບພະແນກການ ແລະ ພາກສ່ວນທີ່ກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ ດຳເນີນການຄຸ້ມຄອງໂຮງງານປຸງແຕ່ງຜະລິດຕະພັນສັດນ້ຳ ລວມທັງສະຖານທີ່ວາງຂາຍຜະລິດຕະພັນສັດນ້ຳ ເພື່ອໃຫ້ສອດຄ່ອງກັບມາດຕະຖານດ້ານເຕັກນິກທີ່ກຳນົດ;
6. ຄົ້ນຄວ້າ ແລະ ປະກອບຄຳເຫັນ ກ່ຽວກັບການສະເໜີໂຄງການລົງທຶນ ຫຼື ການດຳເນີນທຸລະກິດ ກ່ຽວກັບການປະມົງ, ບົດປະເມີນຜົນສິ່ງແວດລ້ອມ ຂອງໂຄງການພັດທະນາ ທີ່ມີຜົນກະທົບຕໍ່ຊັບພະຍາກອນປະມົງ, ການກວດກາ-ຮັບຮອງ ມາດຕະຖານ ແລະ ການຂຶ້ນທະບຽນ ຟາມລ້ຽງສັດນ້ຳ;
7. ເປັນເຈົ້າການຄົ້ນຄວ້າ ແລະ ປະກອບຄຳເຫັນ ກ່ຽວກັບການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ປາ ແລະ ສັດນ້ຳທີ່ມີຊີວິດ ລວມທັງແນວພັນ ແລະ ອຸປະກອນ ດ້ານການປະມົງ;
8. ເກັບກຳສັງລວມຂໍ້ມູນສະຖິຕິ ກ່ຽວກັບຟາມລ້ຽງສັດນ້ຳໃຫ້ລະອຽດຄົບຖ້ວນ ພ້ອມທັງສັງລວມປະລິມານການຜະລິດ ແລະ ປະລິມານຄວາມຕ້ອງການບໍລິໂພກ ຢູ່ພາຍໃນປະເທດໃນແຕ່ລະປີ ເພື່ອດຸ່ນດ່ຽງດ້ານສະບຽງອາຫານ ແລະ ແນວພັນ ແລະ ເພື່ອກຳນົດລາຍການ ແລະ ມາດຕະການ ຊຸກຍູ້ສົ່ງເສີມການຜະລິດພາຍໃນທົດແທນການນຳເຂົ້າ ແລະ ຜະລິດເປັນສິນຄ້າ ເພື່ອສົ່ງອອກ;
9. ຍູ້ແຮງການປະມົງເປັນສິນຄ້າແບບເປັນຟາມ ໃຫ້ເປັນການຜະລິດທີ່ທັນສະໄໝ ໂດຍມີການກຳນົດເຂດລ້ຽງ ຕິດພັນກັບການປຸງແຕ່ງ ແລະ ການຕະຫຼາດ ຕາມທ່າແຮງທີ່ໄດ້ປຽບຂອງທ້ອງຖິ່ນ; ຊຸກຍູ້ການພັດທະນາວິສາຫະກິດ, ຟາມ, ຄອບຄົວຕົວແບບ ໃນການຜະລິດສິນຄ້າສົດ, ຊີວະພາບ, ສະອາດ, ຜະລິດສິນຄ້າທີ່ເປັນທ່າແຮງໄດ້ປຽບ ເພື່ອສົ່ງອອກຕ່າງປະເທດ ໂດຍສອດຄ່ອງກັບມາດຕະຖານສຸຂານາໄມ ຂອງປະເທດຄູ່ຄ້າ;
10. ຄົ້ນຄວ້າ, ກຳນົດ ລາຍການ ແລະ ບັນດາມາດຕະການ ສົ່ງເສີມການລ້ຽງສັດນ້ຳ ຮັບໃຊ້ພາຍໃນທົດແທນການນຳເຂົ້າ ເພື່ອປົກປ້ອງຜູ້ຜະລິດພາຍໃນ ພ້ອມທັງວາງແຜນດຸ່ນດ່ຽງການຜະລິດພາຍໃນ ແລະ ການນຳເຂົ້າຜະລິດຕະພັນສິນຄ້າ ກ່ຽວກັບການປະມົງ; ຄົ້ນຄວ້າ, ສັງລວມ ມາດຕະຖານ, ເງື່ອນໄຂ, ດ້ານເຕັກນິກ ແລະ ຄຸນນະພາບ ສິນຄ້າທີ່ມີສັນຍາວຽກງານສຸຂານາໄມ ແລະ ສຸຂານາໄມພືດ (SPS) ແລ້ວ; ສຶກສາ ແລະ ຄົ້ນຄວ້າ ວິທີການ, ຂັ້ນຕອນ, ມາດຕະຖານລະບຽບການ, ວິເຄາະ, ວິໄຈ ຕະຫຼາດ ຂອງບັນດາປະເທດທີ່ມີຄວາມຕ້ອງການ ເພື່ອກຳນົດຊະນິດສິນຄ້າບຸລິມະສິດສົ່ງອອກ ຂອງປະເທດເຮົາທີ່ມີທ່າແຮງ; ປະສານ ແລະ ເຈລະຈາ ເຕັກນິກເປີດຕະຫຼາດ ຢ່າງເປັນທາງການສຳລັບສົ່ງອອກສັດນ້ຳ ແລະ ຜະລິດຕະພັນສັດນ້ຳ ກັບປະເທດຄູ່ຄ້າ;
11. ພັດທະນາ, ວິເຄາະ-ວິໄຈ, ສ້າງຖານຂໍ້ມູນ ດ້ານການປະມົງ ແລະ ແຫຼ່ງທີ່ຢູ່ອາໄສ ຂອງສັດນ້ຳ ຢ່າງເປັນລະບົບ ດ້ວຍການນຳໃຊ້ລະບົບເຕັກໂນໂລຊີທີ່ທັນສະໄໝ ໃຫ້ສາມາດເຊື່ອມໂຍງ ພາຍໃນ ແລະ ສາກົນ; ພັດທະນາເຕັກນິກການວິໄຈຜະລິດຕະພັນສັດນ້ຳ ໃຫ້ໄດ້ຕາມມາດຕະຖານ ຂອງຂົງເຂດ ແລະ ສາກົນ;

12. ຊຸກຍູ້, ສະໜັບສະໜູນ ການພັດທະນາ, ປົກປັກຮັກສາ ແລະ ນຳໃຊ້ ແນວພັນສັດນ້ຳ, ການຜະລິດອາຫານປາ ແລະ ອາຫານສັດນ້ຳ;
13. ປັບປຸງ ແລະ ພັດທະນາ ໂຄງລ່າງພື້ນຖານ, ວັດຖຸເຕັກນິກ ແລະ ຊັບພະຍາກອນມະນຸດ ເພື່ອອຳນວຍຄວາມສະດວກ ໃຫ້ແກ່ການປະຕິບັດວຽກງານໃນຂົງເຂດການປະມົງ; ຊຸກຍູ້, ສະໜັບສະໜູນ ດ້ານເຕັກນິກ ແລະ ວິຊາການ ແລະ ອື່ນໆ ໃຫ້ແກ່ບັນດາສູນ, ສະຖານີ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ໃຫ້ມີຄວາມເຂັ້ມແຂງ;
14. ຊຸກຍູ້ການສ້າງ ແລະ ການຄຸ້ມຄອງ ກຸ່ມ, ສະມາຄົມ, ສະຫະກອນ ກ່ຽວກັບວິຊາຊີບການປະມົງ ລວມທັງການສ້າງກອງທຶນພັດທະນາ ດ້ານການລ້ຽງ ແລະ ການຮັກສາສຸຂະພາບສັດນ້ຳ;
15. ກວດກາ, ຕິດຕາມ ແລະ ສະກັດກັ້ນ ທຸກການກະທຳ ທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການປະມົງ ພ້ອມທັງເປັນເຈົ້າການປະກອບສຳນວນຄະດີ ແລະ ລາຍງານການກະທຳຄວາມຜິດຕໍ່ເຈົ້າໜ້າທີ່ທີ່ກ່ຽວຂ້ອງ;
16. ຄົ້ນຄວ້າ ອອກ ຫຼື ໂຈະ ການອະນຸຍາດການດຳເນີນທຸລະກິດ ກ່ຽວກັບໂຮງງານປຸງແຕ່ງຜະລິດຕະພັນສັດນ້ຳ, ສະຖານທີ່ເກັບຮັກສາ ແລະ ບ່ອນວາງຂາຍຜະລິດຕະພັນສັດນ້ຳ;
17. ພັດທະນາເຕັກນິກການວິໄຈຜະລິດຕະພັນສັດນ້ຳ ໃຫ້ໄດ້ຕາມມາດຕະຖານ ຂອງຂົງເຂດ ແລະ ສາກົນ;
18. ເປັນເຈົ້າການພັດທະນາລະບົບຖານຂໍ້ມູນ, ເກັບກຳ ແລະ ວິເຄາະ ຂໍ້ມູນສະຖິຕິ ກ່ຽວກັບຜະລິດຕະພັນສັດນ້ຳຢາ, ສານຕົກຄ້າງ, ໂຮງງານປຸງແຕ່ງຜະລິດຕະພັນສັດນ້ຳ, ສະຖານທີ່ເກັບຮັກສາ ແລະ ບ່ອນວາງຂາຍຜະລິດຕະພັນສັດນ້ຳ; ພົວພັນຮ່ວມມື, ແລກປ່ຽນບົດຮຽນ ກັບທຸກພາກສ່ວນທີ່ກ່ຽວຂ້ອງ ລວມທັງສະຖາບັນການສຶກສາ ພ້ອມທັງຂົນຂວາຍ, ຍາດແຍ່ງການຊ່ວຍເຫຼືອ ເພື່ອພັດທະນາວຽກງານປຸງແຕ່ງຜະລິດຕະພັນສັດ ແລະ ສັດນ້ຳຂັ້ນຕົ້ນ ໃຫ້ມີຄວາມເຂັ້ມແຂງ;
19. ສະກັດກັ້ນການກະທຳທີ່ລະເມີດຕໍ່ກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຄຸນນະພາບ ຂອງຜະລິດຕະພັນສັດນ້ຳ ພ້ອມທັງໃຫ້ຄວາມຮ່ວມມື, ສະໜອງຂໍ້ມູນການກະທຳຄວາມຜິດຕໍ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
20. ສັງລວມ, ສະຫຼຸບລາຍງານ ການຈັດຕັ້ງປະຕິບັດວຽກງານຮອບດ້ານ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈຳປີ, ກາງສະໄໝ ແລະ 5 ປີ ໃຫ້ຂັ້ນເທິງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃຫ້ຖືກຕ້ອງ, ຄົບຖ້ວນ, ເປັນປົກກະຕິ ແລະ ທັນເວລາ;
21. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 13 ໜ້າທີ່ ຂອງສູນວິໄຈພະຍາດສັດ**

ສູນວິໄຈພະຍາດສັດ ມີໜ້າທີ່ ດັ່ງນີ້:

1. ຄຸ້ມຄອງ ແລະ ພັດທະນາ ຫ້ອງວິໄຈພະຍາດສັດ ແລະ ຜະລິດຕະພັນສັດ ຂັ້ນສູນກາງ ແລະ ລະດັບພາກ ໃຫ້ກ້າວໜ້າທັນສະໄໝ, ສ້າງ ແລະ ປັບປຸງພື້ນຖານໂຄງລ່າງດ້ານເຕັກນິກ ແລະ ວິຊາການ ເພື່ອນຳໃຊ້ເຂົ້າໃນຂະບວນການວິໄຈ;
2. ພັດທະນາລະບົບ ການວິໄຈ, ບົ່ງມະຕິພະຍາດສັດ ແລະ ຜະລິດຕະພັນສັດ; ດຳເນີນການວິໄຈຊອກຫາເຊື້ອພະຍາດຕິດແປດ ລະຫວ່າງ ສັດສູ່ສັດ ແລະ ຈາກສັດສູ່ຄົນ, ເຊື້ອທີ່ຕ້ານຕໍ່ຢາຕ້ານເຊື້ອຈຸລະຊີບ ລວມທັງການວິໄຈພູມຕ້ານທານຕໍ່ພະຍາດ;

3. ສ້າງ ແລະ ປັບປຸງ ມາດຕະຖານເຕັກນິກ, ຄູ່ມື, ຄຳແນະນຳ ກ່ຽວກັບການວິໄຈພະຍາດສັດ ແລະ ຜະລິດຕະພັນສັດ ໃຫ້ສອດຄ່ອງກັບພາກພື້ນ ແລະ ສາກົນ;
4. ຕິດຕາມ, ກວດກາ ແລະ ປະເມີນ ມາດຕະຖານການວິໄຈພະຍາດສັດ ແລະ ຜະລິດຕະພັນສັດ ຂອງພາກລັດ ແລະ ເອກະຊົນ ໃຫ້ມີຄຸນນະພາບ;
5. ສ້າງ ແລະ ຂະຫຍາຍ ຕາໜ່າງຫ້ອງວິໄຈພະຍາດສັດ ຢູ່ຂັ້ນທ້ອງຖິ່ນ ເພື່ອໃຫ້ສາມາດວິໄຈ ໃນຂັ້ນພື້ນຖານ ລວມທັງເຮັດໜ້າທີ່ໃນການເກັບ, ຮັກສາ ແລະ ນຳສົ່ງຕົວຢ່າງ;
6. ພັດທະນາລະບົບການເກັບກຳ ແລະ ສັງລວມຂໍ້ມູນຂ່າວສານ ກ່ຽວກັບການວິໄຈພະຍາດສັດ ໃຫ້ຖືກຕ້ອງ ວ່ອງໄວ ແລະ ທັນສະໄໝ;
7. ເກັບຮັກສາເຊື້ອພະຍາດສັດ ເພື່ອການຄົ້ນຄວ້າວິໄຈ ແລະ ພັດທະນາການບົ່ງມະຕິພະຍາດ ແລະ ສານຊີວະພັນ;
8. ປະສານງານ ແລະ ແລກປ່ຽນຂໍ້ມູນຂ່າວສານ ດ້ານການວິໄຈພະຍາດສັດ ແລະ ຜະລິດຕະພັນສັດ ກັບພາກສ່ວນອື່ນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ເພື່ອຍົກລະດັບຫ້ອງວິໄຈໃຫ້ມີຄວາມເຂັ້ມແຂງ;
9. ພົວພັນຮ່ວມມືກັບຫ້ອງວິໄຈ ອ້າງອີງຂອງຂົງເຂດ ແລະ ສາກົນ ໃນການບົ່ງມະຕິ ແລະ ຄົ້ນຄວ້າວິໄຈພະຍາດສັດ ແລະ ຜະລິດຕະພັນສັດ;
10. ເຝົ້າລະວັງ ແລະ ສຸ່ມເກັບຕົວຢ່າງ ເພື່ອມາວິໄຈ ພະຍາດສັດ, ພະຍາດຕິດຕໍ່ຈາກສັດສູ່ຄົນ ແລະ ເຊື້ອພະຍາດທີ່ຕ້ານຕໍ່ຢາຕ້ານເຊື້ອຈຸລະຊີບ ໃຫ້ເປັນປົກກະຕິ; ວິໄຈ ແລະ ຢັ້ງຢືນ ຄຸນນະພາບ ແລະ ຄວາມປອດໄພ ຜະລິດຕະພັນສັດ ຂັ້ນຕົ້ນ ໃຫ້ແກ່ ຜູ້ຜະລິດ, ຜູ້ຈຳໜ່າຍ, ການນຳເຂົ້າ ແລະ ສົ່ງອອກ;
11. ສັງລວມ, ສະຫຼຸບລາຍງານ ການຈັດຕັ້ງປະຕິບັດວຽກງານຮອບດ້ານ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈຳປີ, ກາງສະໄໝ ແລະ 5 ປີ ໃຫ້ຂັ້ນເທິງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃຫ້ຖືກຕ້ອງ, ຄົບຖ້ວນ, ເປັນປົກກະຕິ ແລະ ທັນເວລາ;
12. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 14 ໜ້າທີ່ ຂອງສູນຜະລິດຢາສັດຕະວະແພດ**

ສູນຜະລິດຢາສັດຕະວະແພດ ມີໜ້າທີ່ ດັ່ງນີ້:

1. ພັດທະນາເຕັກນິກການຜະລິດ, ກວດກາຄຸນນະພາບ ເພື່ອຜະລິດຢາກັນພະຍາດສັດ ທີ່ມີຄຸນພະພາບ ແລະ ປອດໄພ;
2. ວິໄຈ, ຄົ້ນຄ້ວາ ເຊື້ອພັນຢາກັນພະຍາດສັດ ເພື່ອໃຫ້ໄດ້ຢາກັນພະຍາດທີ່ສາມາດປ້ອງກັນເຊື້ອພະຍາດ ທີ່ເປັນສາເຫດໃຫ້ເກີດການລະບາດ ຫຼື ມີຄວາມສ່ຽງທີ່ອາດຈະເກີດໃນປະເທດເຮົາ;
3. ຜະລິດ ແລະ ສະໜອງ ຢາກັນພະຍາດສັດ ແລະ ຂະຫຍາຍຕາໜ່າງການນຳໃຊ້ຢາສັດຕະວະແພດ ພ້ອມທັງການສະໜອງອຸປະກອນການສັດຕະວະແພດ;
4. ສ້າງ ແລະ ປັບປຸງ ພື້ນຖານໂຄງລ່າງດ້ານເຕັກນິກ ແລະ ວິຊາການ ເພື່ອນຳໃຊ້ເຂົ້າໃນຂະບວນການຜະລິດ ແລະ ກວດກາ, ທົດລອງ, ຢັ້ງຢືນ ຄຸນນະພາບຢາສັດຕະວະແພດ;
5. ຄົ້ນຄວ້າ, ວິໄຈ ແລະ ຢັ້ງຢືນ ຄຸນນະພາບຢາສັດຕະວະແພດ ເພື່ອສະເໜີຂໍຂຶ້ນທະບຽນໃຫ້ແກ່ຜູ້ຜະລິດ, ຈຳໜ່າຍ, ນຳເຂົ້າ, ສົ່ງອອກ;
6. ປະກອບຄຳເຫັນໃນການຄົ້ນຄ້ວາ ກ່ຽວກັບການລົງທຶນ, ການນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ແລະ ຈຳໜ່າຍຢາກັນພະຍາດສັດ; ✓

7. ພັດທະນາການລ້ຽງສັດທົດລອງ ເພື່ອນຳໃຊ້ເຂົ້າໃນການຜະລິດ ແລະ ກວດກາຄຸນນະພາບຢາກັນພະຍາດສັດ ແລະ ຜະລິດຕະພັນຢາສັດຕະວະແພດ;
8. ຄຸ້ມຄອງ, ບູລະນະ ແລະ ສ້ອມແປງພາຫະນະ, ເຄື່ອງຈັກ, ເຄື່ອງມືຮັບໃຊ້ການຜະລິດພາຍໃນສູນ ໃຫ້ສາມາດນຳໃຊ້ໃຫ້ເກີດປະໂຫຍດສູງສຸດ;
9. ສ້າງ, ປັບປຸງ ແລະ ເຜີຍແຜ່ ຂໍ້ມູນຂ່າວສານ ກ່ຽວກັບການນຳໃຊ້ຢາ ແລະ ອຸປະກອນສັດຕະວະແພດ ຢ່າງເປັນລະບົບທົ່ວເຖິງ;
10. ແລກປ່ຽນບົດຮຽນ, ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ໃນການພັດທະນາການຜະລິດ ແລະ ຄວບຄຸມຄຸນນະພາບຢາສັດຕະວະແພດ;
11. ສັງລວມ, ສະຫຼຸບລາຍງານ ການຈັດຕັ້ງປະຕິບັດວຽກງານຮອບດ້ານ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈຳປີ, ກາງສະໄໝ ແລະ 5 ປີ ໃຫ້ຂັ້ນເທິງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃຫ້ຖືກຕ້ອງ, ຄົບຖ້ວນ, ເປັນປົກກະຕິ ແລະ ທັນເວລາ;
12. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 15 ໜ້າທີ່ ຂອງສູນມາດຕະຖານ ແລະ ວິໄຈອາຫານສັດ**

ສູນມາດຕະຖານ ແລະ ວິໄຈອາຫານສັດ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ຍຸດທະສາດ, ນະໂຍບາຍ, ຂໍ້ຕົກລົງ, ຄຳສັ່ງ ກຳນົດມາດຕະຖານເຕັກນິກ, ຄູ່ມື, ຄຳແນະນຳ ຕໍ່ການຜະລິດອາຫານສັດ;
2. ກວດກາ, ວິໄຈ ຄຸນນະພາບ ແລະ ຄວາມປອດໄພ ຂອງອາຫານສັດ ພ້ອມທັງຂະຫຍາຍຕາໜ່າງ ຢູ່ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ;
3. ຄຸ້ມຄອງໂຮງງານຜະລິດອາຫານສັດ, ໂຮງປະສົມອາຫານສັດ, ຜະລິດຕະພັນອາຫານສັດພາຍໃນ ແລະ ຮ້ານຈຳໜ່າຍອາຫານສັດ;
4. ຄົ້ນຄ້ວາ, ປະກອບຄຳເຫັນ ດ້ານວິຊາການ ຕໍ່ການອະນຸຍາດ ການສ້າງຕັ້ງໂຮງງານອາຫານສັດ, ໂຮງປະສົມຜະລິດຕະພັນອາຫານສັດ, ສາງອາຫານສັດ ແລະ ພາຫະນະໃນການຂົນສົ່ງ, ຮັບຮອງບົດວິພາກເສດຖະກິດ-ເຕັກນິກ ລວມທັງການຂໍອະນຸຍາດນຳເຂົ້າ, ຈຳໜ່າຍກົນຈັກ, ອະໄຫຼ່ກົນຈັກ ແລະ ເຄື່ອງມືຮັບໃຊ້;
5. ປະສານສົມທົບກັບພະແນກລະບຽບການ ແລະ ສຸຂານາໄມ ເພື່ອຄົ້ນຄວ້າ ແລະ ປະກອບຄຳເຫັນ ດ້ານວິຊາການ ໃນການຂຶ້ນ, ຈົດທະບຽນ ສູດອາຫານສັດ-ສັດນ້ຳ ແລະ ຈົດລິຂະສິດສູດອາຫານສັດ;
6. ຄຸ້ມຄອງ ການຜະລິດ, ການນຳເຂົ້າ, ການສົ່ງອອກ, ການສົ່ງຜ່ານ ອາຫານສັດ, ວັດຖຸດິບອາຫານສັດ ແລະ ສ່ວນປະສົມອາຫານສັດ;
7. ປະສານສົມທົບກັບພະແນກລະບຽບການ ແລະ ສຸຂານາໄມ ເພື່ອຄົ້ນຄວ້າ, ປະກອບຄຳເຫັນ ແລະ ນຳສະເໜີ ອອກ, ໂຈະ ຫຼື ຖອນ ໃບຢັ້ງຢືນສຸຂານາໄມ, ໃບຢັ້ງຢືນການຜະລິດທີ່ດີ (GMP), ລະບົບວິເຄາະ, ຄວບຄຸມຈຸດອັນຕະລາຍ (HACCP) ແລະ ໃບອະນຸຍາດດຳເນີນກິດຈະການ;
8. ສ້າງຄວາມເຂັ້ມແຂງ ກ່ຽວກັບເຕັກນິກການວິໄຈອາຫານສັດ, ການນຳໃຊ້ເຄື່ອງມື, ອຸປະກອນ, ການຖະໜອມ ແລະ ນຳໃຊ້ອາຫານສັດ ໃຫ້ແກ່ວິຊາການຂັ້ນທ້ອງຖິ່ນ ແລະ ຜູ້ປະກອບການ;
9. ແລກປ່ຽນບົດຮຽນ, ຮ່ວມມື ກັບພາຍໃນ, ຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ລວມທັງສະຖາບັນການສຶກສາໃນການທົດລອງສູດອາຫານສັດ ເພື່ອພັດທະນາໃຫ້ເຂັ້ມແຂງ;

10. ສ້າງຖານຂໍ້ມູນສະຖິຕິ ແລະ ເຜີຍແຜ່ຂໍ້ມູນຂ່າວສານ ດ້ານອາຫານສັດ ດ້ວຍການນຳໃຊ້ລະບົບເຕັກໂນໂລຊີທີ່ທັນສະໄໝ ພ້ອມທັງດຸ່ນດ່ຽງຄວາມຕ້ອງການອາຫານສັດ ຂອງປະເທດເຮົາໃນແຕ່ລະໄລຍະ;
11. ຊຸກຍູ້, ສົ່ງເສີມ ການຜະລິດຫົວອາຫານສັດ ແລະ ສັດນໍ້າ ຢູ່ພາຍໃນປະເທດ ໃຫ້ສາມາດກຸ້ມຕົນເອງ ແລະ ເປັນສິນຄ້າສົ່ງອອກ;
12. ຄົ້ນຄວ້າ ແລະ ຄິດໄລ່ ໂຄງປະກອບລາຄາຕົ້ນທຶນການຜະລິດ ຂອງຜະລິດຕະພັນອາຫານສັດ ແລະ ສັດນໍ້າ ແຕ່ລະໄລຍະ;
13. ສັງລວມ, ສະຫຼຸບລາຍງານ ການຈັດຕັ້ງປະຕິບັດວຽກງານຮອບດ້ານ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈຳປີ, ກາງສະໄໝ ແລະ 5 ປີ ໃຫ້ຂັ້ນເທິງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃຫ້ຖືກຕ້ອງ, ຄົບຖ້ວນ, ເປັນປົກກະຕິ ແລະ ທັນເວລາ;
14. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 16 ໜ້າທີ່ ຂອງສູນພັດທະນາການປະມົງ**

ສູນພັດທະນາການປະມົງ ມີໜ້າທີ່ ດັ່ງນີ້:

1. ການພັດທະນາ ແລະ ສ້າງມາດຕະຖານເຕັກນິກ ກ່ຽວກັບການຜະລິດແນວພັນ, ປັບປຸງພັນການລ້ຽງ ແລະ ການປຸງແຕ່ງຜະລິດຕະພັນ ລວມທັງມາດຕະຖານຟາມສັດນໍ້າ;
2. ຄົ້ນຄວ້າ, ສ້າງ ແລະ ປັບປຸງພື້ນຖານໂຄງລ່າງດ້ານເຕັກນິກ ແລະ ວິຊາການ ເພື່ອນຳໃຊ້ເຂົ້າໃນການພັດທະນາການປະມົງ;
3. ພັດທະນາເຕັກນິກການຮັກສາສຸຂະພາບສັດນໍ້າ, ການວິໄຈພະຍາດສັດນໍ້າ ລວມທັງການກວດກາຄຸນນະພາບນໍ້າສຳລັບການປະມົງ; ພັດທະນາ ແລະ ກຳນົດ ເຕັກນິກການຫາ, ເຄື່ອງມືຫາປາ ແລະ ສັດນໍ້າ ທີ່ເໝາະສົມ;
4. ສ້າງຄູ່ມື, ສື່ໂຄສະນາ ແລະ ເຜີຍແຜ່ເຕັກນິກ ກ່ຽວກັບການລ້ຽງປາ ແລະ ສັດນໍ້າ ພ້ອມທັງຝຶກອົບຮົມທາງດ້ານເຕັກນິກ-ເຕັກໂນໂລຊີ ກ່ຽວກັບການຜະລິດແນວພັນ, ການລ້ຽງ, ການຮັກສາສຸຂະພາບ ແລະ ການປຸງແຕ່ງປາ ແລະ ສັດນໍ້າ;
5. ຜະລິດ, ສະໜອງ ລູກປາ ແລະ ສັດນໍ້າ ເພື່ອຮັບໃຊ້ໃຫ້ແກ່ການສົ່ງເສີມການລ້ຽງປາ ແລະ ສາທິດເຕັກນິກ ກ່ຽວກັບການລ້ຽງ, ເກັບກູ້ ແລະ ປຸງແຕ່ງຜະລິດຕະພັນ ສັດນໍ້າ;
6. ເກັບກຳ ແລະ ສ້າງຖານຂໍ້ມູນຂ່າວສານ ກ່ຽວກັບການວິໄຈຄຸນນະພາບນໍ້າ ແລະ ພະຍາດປາ-ສັດນໍ້າ ໃນຂອບເຂດທົ່ວປະເທດ;
7. ປະສານງານຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອພັດທະນາການລ້ຽງປາ ແລະ ສັດນໍ້າ ທັງພາຍໃນ ແລະ ຕ່າງປະເທດ;
8. ສັງລວມ, ສະຫຼຸບລາຍງານ ການຈັດຕັ້ງປະຕິບັດວຽກງານຮອບດ້ານ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈຳປີ, ກາງສະໄໝ ແລະ 5 ປີ ໃຫ້ຂັ້ນເທິງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃຫ້ຖືກຕ້ອງ, ຄົບຖ້ວນ, ເປັນປົກກະຕິ ແລະ ທັນເວລາ;
9. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

## ໝວດທີ 5
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

### ມາດຕາ 17 ຫຼັກການ

ກົມລ້ຽງສັດ ແລະ ການປະມົງ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະກ່ ຽວກັບບັນຫາລວມ ຂອງກົມ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ ຢ່າງລະອຽດຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງ ຂອງພະນັກງານ-ລັດຖະກອນ ແລະ ພາລະກອນ ທຸກລະດັບ;
3. ທຸກການເຄື່ອນໄຫວວຽກງານ ແມ່ນອີງໃສ່ກົດໝາຍ, ລະບຽບການ ແລະ ຫຼັກການລວມຂອງພັກ-ລັດ; ນຳເອົາແນວທາງນະໂຍບາຍ ຂອງພັກ-ລັດຖະບານ ແລະ ນຳເອົາແຜນການປະຈຳປີ, ແຜນ 5 ປີ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

### ມາດຕາ 18 ແບບແຜນວິທີເຮັດວຽກ

ກົມລ້ຽງສັດ ແລະ ການປະມົງ ມີແບບແຜນວິທີເຮັດວຽກ ດັ່ງນີ້:

1. ເຮັດວຽກມີແຜນງານ, ແຜນການ ແລະ ໂຄງການລະອຽດ; ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ, ປະສານສົມທົບຢ່າງແໜ້ນແຟ້ນ ກັບພາກສ່ວນກ່ຽວຂ້ອງ ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດວຽກງານໃຫ້ໄດ້ຮັບຜົນດີ;
2. ເຮັດວຽກມີການກວດກາ, ຕິດຕາມ, ຊຸກຍູ້, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາຜົນໄດ້-ຜົນເສຍ ຂອງວຽກງານ ພ້ອມທັງປະຕິບັດລາຍງານສ່ອງແສງ ຢ່າງເຂັ້ມງວດ;
3. ເຮັດວຽກຕ້ອງຕິດພັນກັບຮາກຖານ, ຕິດພັນກັບຕົວຈິງ, ຕິດພັນກັບຄະນະພັກ, ຄະນະນຳແຕ່ລະຂັ້ນ ເພື່ອຊຸກຍູ້, ຕິດຕາມ, ກວດກາ, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາດ້ານດີ-ດ້ານອ່ອນ; ສະຫຼຸບ, ລາຍງານຂໍຄຳເຫັນ ໃນການຈັດຕັ້ງປະຕິບັດແຜນການ ເປັນແຕ່ລະໄລຍະ;
4. ຫົວໜ້າກົມ ມີຄວາມຮັບຜິດຊອບໂດຍກົງ ຕໍ່ ຄະນະປະຈຳພັກ, ຄະນະພັກ, ລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກພ່ອງ ໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງ ຂອງຕົນ, ຮອງຫົວໜ້າກົມ ມີໜ້າທີ່ຊ່ວຍວຽກ ແລະ ລົງເລິກຮັບຜິດຊອບວຽກງານໃດໜຶ່ງ ຕາມການແບ່ງງານ ແລະ ມອບໝາຍ ຂອງຫົວໜ້າກົມ;
5. ຫົວໜ້າກົມ ເປັນຜູ້ລົງລາຍເຊັນຕໍ່ບັນດາເອກະສານສຳຄັນ, ໃນເວລາຫົວໜ້າກົມ ຕິດຂັດ ຕ້ອງມອບສິດໃຫ້ຮອງຫົວໜ້າກົມ ທ່ານໃດທ່ານໜຶ່ງ ຮັກສາການແທນ ແລະ ຜູ້ຮັກສາການແທນ ຕ້ອງລາຍງານວຽກງານ ທີ່ຕົນເອງໄດ້ແກ້ໄຂ ແລະ ວຽກທີ່ຍັງຄົງຄ້າງ ໃຫ້ຫົວໜ້າກົມ ຊາບ ພາຍຫຼັງກັບມາປະຈຳການ;
6. ປະຕິບັດລະບອບປະຊຸມ ປະຈຳເດືອນ, 3 ເດືອນ, 6 ເດືອນ, ປະຈຳປີ ແລະ ປະຕິບັດລະບອບລາຍງານ ໃຫ້ກະຊວງກະສິກຳ ແລະ ສິ່ງແວດລ້ອມ ແລະ ພາກສ່ວນທີ່ກ່ຽວຂ້ອງ ເປັນປົກກະຕິ;
7. ປະຕິບັດການພົວພັນປະສານງານ ພາຍໃນ ແລະ ພາຍນອກ ໃຫ້ສອດຄ່ອງຕາມລະບຽບການ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 19 ງົບປະມານ ແລະ ຕາປະທັບ**

ກົມລ້ຽງສັດ ແລະ ການປະມົງ ມີງົບປະມານ ແລະ ຕາປະທັບ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 20 ການຈັດຕັ້ງປະຕິບັດ**

ກົມລ້ຽງສັດ ແລະ ການປະມົງ, ຫ້ອງການ, ບັນດາກົມ, ສະຖາບັນ, ຫົວໜ່ວຍວິຊາການລະດັບສອງ ທີ່ຂຶ້ນກັບກະຊວງກະສິກຳ ແລະ ສິ່ງແວດລ້ອມ, ຂະແໜງສາຍຕັ້ງຂັ້ນທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 21 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ນຳໃຊ້ປ່ຽນແທນຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມລ້ຽງສັດ ແລະ ການປະມົງ ສະບັບເລກທີ 5905/ກປ, ລົງວັນທີ 26 ພະຈິກ 2024.

**ລັດຖະມົນຕີ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ

ລັດຖະມົນຕີ

**ປອ. ລິນຄຳ ດວງສະຫວັນ**